ສງວຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24-31 ທັນວາ 2024
ປີທີ 13
ສະບັບທີ 999
ລາຍສັບປະດາ

## ປະທານສະພາແຫ່ງຊາດ ພົບປະພະສັງຄະລາດ ຜູ້ປົກຄອງສາສະໜາເຢຊູ ນິກາຍໂອໂຕດົກ ລັດເຊຍ



(ສພຊ)-ຕອນບ່າຍວັນທີ 9 ທັນວາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຮັບຕ້ອນການເຂົ້າພົບປະຂອງພະສັງຄະລາດ ເຊຣ໌ເກ ຜູ້ປົກຄອງສາສະໜາເຢຊູ ນິກາຍໂອໂຕດົກ ລັດເຊຍ ປະຈຳ

ອ່ານຕໍ່ໜ້າ 8

## ປາຖະກະຖາສອງວັນປະຫວັດສາດຂອງຊາດ ແລະ ເຜີຍແຜ່ເອກະສານສຳຄັນ

(ສພຊ)-ວັນທີ 17 ທັນວາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີປາຖະກະຖາ ວັນຊາດທີ 2 ທັນວາ ຄົບຮອບ 49 ປີ ແລະ ວັນເກີດປະທານໄກສອນ ພົມວິຫານ ຄົບຮອບ 104 ປີ ໂດຍການເປັນປະທານຂອງສະຫາຍປອ. ນາງສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ມີຄະນະບໍລິຫານງານພັກ, ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານ, ຄະນະໜ່ວຍພັກ, ສະມາ



ຊິກພັກແລະພະນັກງານ-ລັດຖະກອນພາຍໃນ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອທົບທວນຄືນມູນເຊື້ອພາລະກິດປົດປ່ອຍຊາດໃນເມື່ອກ່ອນ ກໍຄືຜົນສຳເລັດໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດ

ອ່ານຕໍ່ໜ້າ 8

## ມອບ-ຮັບ ເງິນສະໜັບສະໜູນ ກອງປະຊຸມສະໄໝສາມັນ ແລະ ເຄື່ອງກອງນ້ຳ




(ສພຊ)-ວັນທີ 11 ທັນວາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບເງິນສະໜັບສະໜູນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ມູນຄ່າ 50 ລ້ານກີບ ຈາກກະຊວງພະລັງງານແລະບໍ່ແຮ່ ໂດຍການກ່າວມອບຂອງທ່ານ ໂພໄຊ ໄຊຍະສອນ ລັດຖະມົນຕີກະຊວງພະລັງງານແລະບໍ່ແຮ່, ຕາງໜ້າກ່າວຮັບໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໂດຍມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ກ່ອນໜ້ານັ້ນ 1 ວັນ ກໍໄດ້ມີພິທີມອບ-ຮັບເຄື່ອງກອງນ້ຳສະອາດໃຫ້ແກ່ປະຊາຊົນ ຈຳ

ອ່ານຕໍ່ໜ້າ 11

## ກອງປະຊຸມສຳມະນາບົດບາດແມ່ຍິງ ໃນເວທີການເມືອງ ໃຫ້ແກ່ ສສຊ ເພດຍິງ



(ສພຊ) - ກອງປະຊຸມສຳມະນາກ່ຽວກັບການສົ່ງເສີມບົດບາດແມ່ຍິງໃນເວທີການເມືອງໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ເພດຍິງ ໄດ້ຈັດຂຶ້ນໃນວັນທີ 13-15 ທັນວາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະ ທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ກຳມະການຄະນະປະຈຳ, ປະທານກຳມາທິການຍຸຕິທຳ, ປະທານຄະ

ອ່ານຕໍ່ໜ້າ 12

## ເຝິກອົບຮົມການເປັນວິທະຍາກອນ



(ສພຊ) - ກອງປະຊຸມເຝິກອົບຮົມການເປັນວິທະຍາກອນໃຫ້ແກ່ຄະນະກົມ, ສູນ, ຫ້ອງການ ຂອງສະພາແຫ່ງຊາດ (ສພຊ) ແລະ ຄະນະກຳມະການ, ຄະນະເລຂາທິການສະພາປະຊາຊົນແຂວງ (ສພຂ) ວຽງຈັນ, ບໍລິຄຳໄຊແລະ ໄຊສົມບູນ ໄດ້ຈັດຂຶ້ນໃນວັນທີ 13-16 ທັນວານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານຄະນະຮັບຜິດຊອບກອງປະຊຸມ ແລະ ວິທະຍາກອນເຂົ້າຮ່ວມ 50 ກວ່າທ່ານ; ຈຸດປະສົງແມ່ນເພື່ອພັດທະນາວິທະຍາກອນຂອງ ສພຊ ແລະ ສພຂ ໃຫ້ເປັນເອກະພາບລວມສູນ ແລະ ລົງເລິກສະເພາະດ້ານ ທັງຮັບປະກັນດ້ານເນື້ອໃນຫົວຂໍ້ຫຼັກສູດ, ຄູ່ມືການສອນຢ່າງມີຈຸດສຸມ, ຍົກສູງປະສິດທິພາບ ແລະ ປະສິດທິຜົນໃນການສະເໜີ, ອະທິບາຍເນື້ອໃນບົດຮຽນ ແລະ ການຄົ້ນຄວ້າເອກະສານໃຫ້ດີກວ່າເກົ່າ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ການເຝິກ

ອ່ານຕໍ່ໜ້າ 6

## ກອງປະຊຸມສະໄໝສາມັນເທື່ອທີ 8 ສປນວ ຊຸດທີ II




(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນທີ 16 ທັນວານີ້ ທີ່ຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ (ນວ) ໂດຍການເປັນປະທານ

ອ່ານຕໍ່ໜ້າ 7



ໝ້ຽງເກີດຈາກເຫຼັກ (ໜ້າ 8)



ລັດຖະສະພາເມັກຊິກ... (ໜ້າ 10)




ປັນຍາປະດິດ... (ໜ້າ 12)

# ສພຊ ຈະອະນຸມັດໂຄງການລົງທຶນຂອງລັດ 50 ຕື້ລົງມາ



(ສພຊ) - ວັນທີ 12 ທັນວານີ້, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ທ່ານ ເພັດ ພົມພິພັກ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ສະເໜີໂດຍຫຍໍ້ກ່ຽວກັບການສະເໜີປັບປຸງມາດຕາ 18 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015 ເຊິ່ງເປັນການຜັນຂະຫຍາຍເນື້ອໃນຈິດໃຈຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ໃນຄັ້ງວັນທີ 28 ພະຈິກຜ່ານມາ ແລະ ການປຶກສາຫາລື ແລະ ປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ ໂດຍອີງໃສ່ສະພາບການເໜັງຕີງຂອງອັດຕາແລກປ່ຽນເງິນຕາ, ລາຄາສິນຄ້າ-ອຸປະກອນການກໍ່ສ້າງຕ່າງໆ; ລັດຖະບານ ຈຶ່ງໄດ້ມີໜັງສືສະເໜີ ສະບັບເລກທີ 120/ລບ, ລົງວັນທີ 6 ທັນວາ 2024 ຫາສະພາແຫ່ງຊາດ ພິຈາລະນາອະນຸມັດໃຫ້ສະພາປະຊາຊົນຂັ້ນແຂວງ (ສພຂ) ເປັນຜູ້ພິຈາລະນາອະນຸມັດໂຄງການລົງທຶນຂອງລັດ ຈາກມູນຄ່າຊາວຕື້ກີບລົງມາ ຂຶ້ນເປັນຫ້າສິບຕື້ກີບລົງມາ ໂດຍຕິດພັນກັບມາດຕາ 18 ໂຄງການລົງທຶນຂອງລັດລົງທຶນປົກກະຕິ ໄດ້ກຳນົດເປັນ 5 ປະເພດການລົງທຶນຄື:

1. ໂຄງການລົງທຶນຂອງລັດປະເພດ I ແມ່ນໂຄງການທີ່ມີມູນຄ່າຫຼາຍກວ່າສີ່ຮ້ອຍຕື້ກີບຂຶ້ນໄປ, ໄລຍະປະຕິບັດໂຄງການບໍ່ເກີນເຈັດປີ;

2. ໂຄງການລົງທຶນຂອງລັດປະເພດ II ແມ່ນໂຄງການທີ່ມີມູນຄ່າຫຼາຍກວ່າສອງຮ້ອຍຕື້ຫາສີ່ຮ້ອຍຕື້ກີບ, ໄລຍະປະຕິບັດໂຄງການບໍ່ເກີນຫົກປີ;

3. ໂຄງການລົງທຶນຂອງລັດປະເພດ III ແມ່ນໂຄງການທີ່ມີມູນຄ່າຫຼາຍກວ່າໜຶ່ງຮ້ອຍຕື້ຫາສອງຮ້ອຍຕື້ກີບ, ໄລຍະປະຕິບັດໂຄງການບໍ່ເກີນຫ້າປີ;

4. ໂຄງການລົງທຶນຂອງລັດປະເພດ IV ແມ່ນໂຄງການທີ່ມີມູນຄ່າຫຼາຍກວ່າຊາວຕື້ຫາໜຶ່ງຮ້ອຍຕື້ກີບ, ໄລຍະປະຕິບັດໂຄງການບໍ່ເກີນສີ່ປີ;

5. ໂຄງການລົງທຶນຂອງລັດປະເພດ V ແມ່ນໂຄງການທີ່ມີມູນຄ່າແຕ່ຊາວຕື້ກີບລົງມາ, ໄລຍະປະຕິບັດໂຄງການບໍ່ເກີນສາມປີ.

ແຕ່ອີງໃສ່ສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ຂີດຄວາມສາມາດທາງດ້ານງົບປະມານໃນປັດຈຸບັນ, ລັດຖະບານ ກໍຄືຄະນະປະຈຳສະພາແຫ່ງຊາດ ເອກະພາບກັນເພື່ອສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ພິຈາລະນາຍົກມູນຄ່າການລົງທຶນປະເພດທີ V ຈາກຊາວຕື້ກີບ ເປັນຫ້າສິບຕື້ກີບ; ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ຕ້ອງໄດ້ພິຈາລະນາດັດແກ້ບາງມາດຕາເປັນອັນສະເພາະ ເຊິ່ງໃນກໍລະນີມາດຕາດັ່ງກ່າວຖືກຮັບຮອງ ແມ່ນຈະຖືກຈັດຕັ້ງປະຕິບັດໃນປີ 2025 ເປັນຕົ້ນໄປ. ສ່ວນການປັບປຸງມາດຕາອື່ນໆຫຼືການປັບປຸງກົດໝາຍດັ່ງກ່າວ, ກະຊວງແຜນການ ແລະ ການລົງທຶນ ຍັງຈະສືບຕໍ່ຄົ້ນຄວ້າ ແລະ ນຳສະເໜີຕໍ່ສະພາແຫ່ງຊາດໃນຄັ້ງຕໍ່ໄປ.

# ຫາລືແຜນການສ້າງ ແລະ ປັບປຸງກົດໝາຍ ປະຈຳປີ 2025



(ສພຊ) - ວັນສຸກທີ 13 ທັນວານີ້ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມປຶກສາຫາລືກ່ຽວກັບແຜນການສ້າງ ແລະ ປັບປຸງກົດໝາຍ ປະຈຳປີ 2025 ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການ ສພຊ, ຮອງລັດຖະມົນຕີ, ຮອງຫົວໜ້າອົງການ, ຄະນະກົມ ແລະ ພະນັກງານ-ລັດຖະກອນຈາກພາກສ່ວນທີ່ກ່ຽວຂ້ອງ. ທ່ານ ຄຳແພງ ວິລະພັນ ກ່າວວ່າ: ປີ 2025 ເປັນປີສຸດທ້າຍຂອງສະພາແຫ່ງຊາດ ຊຸດທີ IX ແລະ ຍັງມີວາລະດຳເນີນກອງກອງປະຊຸມສະໄໝສາມັນເທື່ອທີ 9 ແລະ ເທື່ອທີ 10 ເຊິ່ງການຈັດຕັ້ງປະຕິບັດຕົວຈິງຈະມີການນຳເອົາຮ່າງກົດໝາຍເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 9 ເທົ່ານັ້ນ ແລະ ຕາມແຜນການແລ້ວ ມີຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາທັງໝົດ 17 ສະບັບ (ສ້າງໃໝ່ 5, ປັບປຸງ 12) ເຫັນວ່າເປັນຈຳນວນທີ່ຫຼາຍ; ກອງປະຊຸມຄັ້ງນີ້ຈະໄດ້ປຶກສາຫາລືກັນກ່ຽວກັບຄວາມພ້ອມຂອງບັນດາຮ່າງກົດໝາຍດັ່ງກ່າວ ເພື່ອຈັດບຸລິມະສິດໃນການນຳເອົາຮ່າງກົດໝາຍທີ່ມີຄວາມພ້ອມເຂົ້າກອງປະຊຸມສະໄໝວິສາມັນເທື່ອທີ 2 ແລະ ສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ IX.

ໃນກອງປະຊຸມ, ທ່ານ ປອ. ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ ໄດ້ສະເໜີຮ່າງແຜນການສ້າງ ແລະ ປັບປຸງກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ປະຈຳປີ 2025; ຈາກນັ້ນ, ກໍມີການປະກອບຄຳເຫັນຕໍ່ຮ່າງແຜນການດັ່ງກ່າວ ຈາກກະຊວງພາຍໃນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງປ້ອງກັນປະເທດ, ກະຊວງສາທາລະນະສຸກ, ກະຊວງການເງິນ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງແຜນການ ແລະ ການລົງທຶນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງສຶກສາທິການ ແລະ ກິລາ, ກະຊວງຍຸຕິທຳ, ແລະ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຕາມລຳດັບ.

**(ນາງ ອາລິນ ສຸພົມມະປະດິດ)**



# ອັດຕາການປະລະຂອງຄູ ແລະ ນັກຮຽນ ໃນການສຶກສາພາກບັງຄັບ ເພີ່ມຂຶ້ນ



(ສພຊ) - ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ທ່ານ ຮສ. ປອ. ພຸດ ສິມມາລາວົງ ໄດ້ສະເໜີປັບປຸງກົດໝາຍວ່າການສຶກສາ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໃນຕອນບ່າຍວັນທີ 5 ທັນວານີ້ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ເຊິ່ງທ່ານລັດຖະມົນຕີລາຍງານໃຫ້ຮູ້ວ່າ: ກົດໝາຍວ່າດ້ວຍການສຶກສາ ສະບັບປີ 2015 ເປັນກົດໝາຍແມ່ຂອງຂະແໜງການສຶກສາທິການ ແລະ ກິລາ ຖືກນຳໃຊ້ມາເປັນເວລາເກືອບ 9 ປີ ເຫັນວ່າຍັງບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ ແລະ ແຜນພັດທະນາຂະແໜງການສຶກສາທິການແລະກິລາ; ຍັງມີບາງພາກ, ໝວດ ແລະ ມາດຕາ ຄວນໄດ້ຮັບການປັບປຸງຄືນໃໝ່ ເພື່ອໃຫ້ມີຄວາມກົມກຽວ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍອາຊີວະສຶກສາ, ກົດໝາຍວ່າດ້ວຍການສຶກສາຊັ້ນສູງ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍອື່ນທີ່ກ່ຽວຂ້ອງ.

ພ້ອມນັ້ນ, ທ່ານຍັງລາຍງານໃຫ້ຮູ້ດ້ານອ່ອນ ແລະ ບາງຂໍ້ຄົງຄ້າງ ວ່າ: ການກຳນົດເອົາການສຶກສາພາກບັງຄັບ ເປັນການສຶກສາບໍ່ໄດ້ເສຍຄ່າໃນສະຖານການສຶກສາຂອງລັດ, ໃນພາກປະຕິບັດຕົວຈິງ ໂຮງຮຽນຂອງລັດຍັງຂາດເຂີນງົບປະມານ ແລະ ມີບາງໂຮງຮຽນມີຄວາມຈຳເປັນຕ້ອງໄດ້ລະດົມການປະກອບສ່ວນຈາກຜູ້ປົກຄອງ ເພື່ອມາຮັບໃຊ້ໃຫ້ແກ່ການຮຽນ-ການສອນ; ອັດຕາການປະລະຂອງຄູ ແລະ ນັກຮຽນ ໃນການສຶກສາພາກບັງຄັບເພີ່ມຂຶ້ນໃນປັດຈຸບັນສາເຫດຕົ້ນຕໍຈາກສະພາບເສດຖະກິດ, ຄວາມຮັບຜິດຊອບຂອງຄອບຄົວ ແລະ ສັງຄົມ; ງົບປະມານແຫ່ງລັດທີ່ກຳນົດໃຫ້ຂະແໜງສຶກສາທິການ ແລະ ກິລາ ຈົນບັນລຸ 18% ຂອງລາຍຈ່າຍງົບປະມານຂອງລັດຂຶ້ນໄປ, ການຈັດຕັ້ງປະຕິບັດຕົວຈິງຍັງບໍ່ທັນບັນລຸຕາມຄາດໝາຍທີ່ວາງໄວ້; ກອງທຶນສົ່ງເສີມການສຶກສາທີ່ໄດ້ກຳນົດໄວ້ໃນກົດໝາຍ ໃນມາດຕາ 59 ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້; ສະພາທີ່ປຶກສາການສຶກສາຍັງບໍ່ທັນໄດ້ຮັບການຈັດຕັ້ງຢ່າງຄົບຖ້ວນ, ຈັດຕັ້ງໄດ້ພຽງບາງຂະແໜງການ; ການໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍການສຶກສາ ໃຫ້ແກ່ຂະແໜງການອື່ນຢູ່ຂັ້ນສູນກາງແລະທ້ອງຖິ່ນຍັງບໍ່ທັນໄດ້ຈັດຕັ້ງປະຕິບັດຢ່າງກວ້າງຂວາງ; ຄວາມຮັບຜິດຊອບຂອງພໍ່ແມ່ ຫຼື ຜູ້ປົກຄອງ ໃນມາດຕາ 69 ໃນການຊຸກຍູ້ ແລະ ສົ່ງເສີມໃຫ້ລູກຫຼານຂອງຕົນໄດ້ເຂົ້າຮຽນຕາມເກນອາຍຸ ຍັງບໍ່ທັນໄດ້ເອົາໃຈໃສ່ເທົ່າທີ່ຄວນ; ຄວາມຮັບຜິດຊອບຂອງບຸຄະລາກອນ, ຄູ, ພະນັກງານວິຊາການ, ສະຖານການສຶກສາ, ການຈັດຕັ້ງ, ທ້ອງຖິ່ນ ແລະ ສັງຄົມ ຕໍ່ການຈັດຕັ້ງປະຕິບັດສິດ, ໜ້າທີ່ ແລະ ພັນທະຂອງຕົນ ຍັງບໍ່ທັນໄດ້ປະຕິບັດຢ່າງເຂັ້ມງວດເທົ່າທີ່ຄວນ.

ທ່ານ ຮສ. ປອ. ພຸດ ສິມມາລາວົງ ກ່າວຕື່ມອີກວ່າ: ເມື່ອກົດໝາຍວ່າດ້ວຍການສຶກສາສະບັບປັບປຸງ ຖືກຮັບຮອງແລະປະກາດໃຊ້ ຈະເປັນບ່ອນອີງໃຫ້ຂະແໜງການສຶກສາທິການ ແລະ ກິລາ ໃນການສ້າງນະໂຍບາຍ, ແຜນຍຸດສາດ, ແຜນການ, ແຜນງານ, ໂຄງການ ແລະ ບັນດານິຕິກຳຕ່າງໆ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານສຶກສາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ; ຮັບປະກັນໃຫ້ພົນລະເມືອງລາວເຂົ້າເຖິງການສຶກສາທີ່ມີຄຸນນະພາບທຽບເທົ່າກັບພາກພື້ນ ແລະ ສາກົນ ແລະ ຍົກສູງຄວາມເຊື່ອໝັ້ນໃຫ້ແກ່ຊຸມຊົນ, ສັງຄົມ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເຫັນໄດ້ເຖິງຄວາມສຳຄັນຂອງວຽກງານສຶກສາ ທັງຊຸກຍູ້ ແລະ ສົ່ງເສີມການລົງທຶນໃສ່ວຽກງານການສຶກສາໃຫ້ຫຼາຍຂຶ້ນ; ເພີ່ມທະວີຄວາມຮັບຜິດຊອບ, ຍົກສູງຄວາມຮູ້ຄວາມເຂົ້າໃຈ ແລະ ເປັນເຈົ້າການໃນການປະຕິບັດສິດ, ໜ້າທີ່ ແລະ ພັນທະຂອງພົນລະເມືອງທຸກຄົນ ເພື່ອປະກອບສ່ວນດ້ານທຶນຮອນ, ແຮງງານ ແລະ ວັດຖຸປະກອນ ເຂົ້າໃນວຽກງານສຶກສາຢ່າງຕັ້ງໜ້າ.

# ຊ່ຽວຊານບັນຊີລາວ ຈະສາມາດເຄື່ອນໄຫວ ວຽກງານກວດສອບທັງພາຍໃນ ແລະ ຕ່າງປະເທດ



(ສພຊ)-ຕອນບ່າຍວັນທີ 10 ທັນວານີ້, ກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາແຫ່ງຊາດຊຸດທີIX ໂດຍການເປັນປະທານຂອງທ່ານ ພຊ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ທ່ານສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ ໄດ້ສະເໜີປັງປຸງກົດໝາຍວ່າດ້ວຍການກວດສອບອິດສະຫຼະ ເຊິ່ງຜ່ານການຈັດຕັ້ງປະຕິບັດກົດໝາຍສະບັບປີ 2014 ຍັງບໍ່ທັນກຳນົດກົນໄກການຄຸ້ມຄອງຊ່ຽວຊານບັນຊີ ເປັນຕົ້ນ: 1. ການອະນຸຍາດ, ໂຈະ ແລະ ຖອນໃບອະນຸຍາດການເຄື່ອນໄຫວຂອງຊ່ຽວຊານບັນຊີ ເພື່ອເປັນບ່ອນອີງໃນການຕິດຕາມ ແລະ ກວດກາການເຄື່ອນໄຫວຂອງຊ່ຽວຊານບັນຊີໃຫ້ຖືກຕ້ອງຕາມກົດໝາຍ, ມີຈັນຍາບັນຈັນຍາທຳ ແລະ ເປັນມືອາຊີບຢ່າງແທ້ຈິງ; ພ້ອມກັນນັ້ນ, ຍັງບໍ່ທັນໄດ້ກຳນົດກ່ຽວກັບຊ່ຽວຊານບັນຊີຕ່າງປະເທດ ທີ່ຈະມາເປັນຊ່ຽວຊານບັນຊີລາວ ແລະ ເຄື່ອນໄຫວປະກອບອາຊີບຢູ່ ສປປລາວ. 2. ກົດໝາຍສະບັບປັດຈຸບັນ ໄດ້ກຳນົດມາດຕະການປັບໃໝໃນມາດຕາ 90 ເຊິ່ງໄດ້ກຳນົດບັນດາລາຍການເຄື່ອນໄຫວທີ່ຈະຖືກປັບໃໝໃຫ້ແຕ່ລະພາກສ່ວນເຊັ່ນ: ສຳລັບວິສາຫະກິດບັນຊີແລະວິສາຫະກິດກວດສອບ,ນັກກວດສອບ,ຊ່ຽວຊານບັນຊີ, ເປົ້າໝາຍຖືກກວດສອບລວມທັງບຸກຄົນ ແລະ ການຈັດຕັ້ງອື່ນ; ນອກຈາກຈະຕ້ອງໄດ້ເພີ່ມບາງລາຍການທີ່ເປັນການລະເມີດກົດໝາຍໃສ່ຕື່ມ, ຍັງຕິດພັນກັບບັນຫາສະພາບເງິນເຟີ້ໃນປັດຈຸບັນ ເຮັດໃຫ້ການສົມທຽບຄ່າປັບໃໝໃສ່ອັດຕາທີ່ກຳນົດໄວ້ໃນປີ2014ເຫັນວ່າບໍ່ເໝາະສົມກັບສະພາບຕົວຈິງ. 3. ກົດໝາຍສະບັບດັ່ງກ່າວ ຍັງບໍ່ທັນໄດ້ກຳນົດຄວາມຮັບຜິດຊອບລາຍງານຂອງອົງການຄຸ້ມຄອງວຽກງານກວດສອບອິດສະຫຼະ, ວິສາຫະກິດບັນຊີແລະວິສາຫະກິດກວດສອບ ກ່ຽວກັບວຽກງານບັນຊີ ແລະ ກວດສອບອິດສະຫຼະ ຕິດພັນກັບການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ຜູ້ກໍ່ການຮ້າຍ ໃຫ້ອົງການຄຸ້ມຄອງວຽກງານດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. 4. ການສ້າງກົນໄກການຄຸ້ມຄອງ, ຕິດຕາມວິສາຫະກິດບັນຊີ, ວິສາຫະກິດກວດສອບ, ນັກກວດສອບແລະຊ່ຽວຊານບັນຊີ ຕ້ອງມີຄວາມຈະແຈ້ງ ແລະ ຄົບຖ້ວນ; ພ້ອມກັນນັ້ນ, ການພັດທະນາວຽກງານກວດສອບອິດສະຫຼະ ຕ້ອງຮັບປະກັນໃຫ້ສອດຄ່ອງກັບບັນດາປະເທດພາກພື້ນແລະສາກົນ ເນື່ອງຈາກວ່າໃນປັດຈຸບັນ ສປປ ລາວ ໄດ້ເປັນສະມາຊິກສະຫະພັນນັກບັນຊີອາຊຽນ ແລະ ເປັນສະມາຊິກສົມທົບຂອງສະຫະພັນນັກບັນຊີສາກົນ.

ທ່ານ ສັນຕິພາບ ພົມວິຫານ ໃຫ້ຮູ້ວ່າ: ເມື່ອກົດໝາຍສະບັບນີ້ ຖືກຮັບຮອງ ແລະ ປະກາດໃຊ້ຢ່າງເປັນທາງການ ຈະສ້າງຄວາມໜ້າເຊື່ອຖືຕໍ່ພາກພື້ນ ແລະ ສາກົນຕໍ່ກັບການປະຕິບັດພັນທະຂອງສປປລາວກ່ຽວກັບຂອບອາຊຽນ ແລະ ອົງການການຄ້າໂລກ ໃນການຊຸກຍູ້, ສົ່ງເສີມການຍົກລະດັບວິຊາຊີບການບັນຊີແລະກວດສອບ ໃຫ້ເທົ່າທຽມກັບບັນດາປະເທດອາຊຽນແລະສາກົນ; ເປັນເຄື່ອງມືໃນການຄຸ້ມຄອງ,ຕິດຕາມກວດກາການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານກວດສອບອິດສະຫຼະໃຫ້ມີຄວາມເຂັ້ມແຂງ, ຖືກຕ້ອງ, ໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນ;ສ້າງຊ່ຽວຊານບັນຊີລາວ ໃຫ້ມີຄຸນນະພາບດ້ານຄວາມຮູ້ຄວາມສາມາດທຽບເທົ່າພາກພື້ນ ແລະ ສາກົນ ເຮັດໃຫ້ຊ່ຽວຊານບັນຊີລາວ ສາມາດເຄື່ອນໄຫວວຽກງານກວດສອບທັງພາຍໃນ ແລະ ຕ່າງປະເທດ ແລະ ຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ; ປົກປ້ອງສິດແລະຜົນປະໂຫຍດຂອງສັງຄົມ, ນັກກວດສອບ, ເປົ້າໝາຍຖືກກວດສອບ, ສະກັດກັ້ນປາກົດການຫຍໍ້ທໍ້ທາງດ້ານການຄຸ້ມຄອງການເງິນ; ເຮັດໃຫ້ການຈັດຕັ້ງ, ພະນັກງານ-ລັດຖະກອນທີ່ເຮັດວຽກຄຸ້ມຄອງການເງິນແຫ່ງລັດ ແລະ ການກວດສອບອິດສະຫຼະ ມີສະຕິເຄົາລົບກົດໝາຍ; ສົ່ງເສີມ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນທັງພາຍໃນແລະຕ່າງປະເທດ; ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ ມີຄວາມເຂັ້ມແຂງ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດໃຫ້ຂະຫຍາຍຕົວ ແລະ ໝັ້ນຄົງ; ປະກອບສ່ວນເຂົ້າໃນການປ້ອງກັນ, ແກ້ໄຂບັນຫາກ່ຽວຂ້ອງຕ່າງໆທີ່ຕັ້ງຂຶ້ນໄລຍະຜ່ານມາ ໄດ້ຮັບຜົນດີກວ່າເກົ່າ.



# ອົງການໄອຍະການປະຊາຊົນ ສະເໜີປັບປຸງກົດໝາຍຂອງຕົນ



(ສພຊ) - ວັນທີ 5 ທັນວາຜ່ານມາ, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ທ່ານ ໄຊຊະນະ ໂຄດພູທອນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໄດ້ສະເໜີປັບປຸງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນເຊິ່ງທ່ານໃຫ້ຮູ້ວ່າ:ຜ່ານການຈັດຕັ້ງປະຕິບັດ ກໍຍັງມີບາງບັນຫາ ຫຼື ບາງມາດຕາ ທີ່ຍັງບໍ່ທັນສອດຄ່ອງ, ບໍ່ທັນສາມາດປະຕິບັດໄດ້ ແລະ ເປັນຊ່ອງວ່າງ ເຊິ່ງມີຄວາມຈຳເປັນຕ້ອງໄດ້ປະເມີນຜົນການຈັດຕັ້ງປະຕິບັດ ແລະ ປັບປຸງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນໃນແຕ່ລະໄລຍະ ເພື່ອໃຫ້ມີຄວາມສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ແລະ ສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຕາມທິດການສ້າງລັດທີ່ປົກຄອງດ້ວຍກົດໝາຍ. ເມື່ອກົດໝາຍສະບັບປັບປຸງນີ້ ຖືກຮັບຮອງ ແລະ ປະກາດໃຊ້ແລ້ວ ຈະເປັນເຄື່ອງມືອັນສຳຄັນໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ແລະ ໃນການສະກັດກັ້ນການກະທຳຜິດ, ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງພ້ອມທັງສຶກສາອົບຮົມພົນລະເມືອງໃຫ້ເຄົາລົບ ແລະ ປະຕິບັດກົດໝາຍ ແນໃສ່ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ສ້າງເງື່ອນໄຂໃຫ້ປະຊາຊົນລາວບັນດາເຜົ່າ ປະກອບສ່ວນເຂົ້າໃນການປົກປັກຮັກສາແລະພັດທະນາປະເທດຊາດ; ວຽກງານໄອຍະການປະຊາຊົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ, ມີປະສິດທິພາບ, ປະສິດທິຜົນໃນຂອບເຂດທົ່ວປະເທດ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ການພັດທະນາເສດຖະກິດ-ສັງຄົມ, ສະພາບການພັດທະນາຂອງລະບົບຍຸຕິທຳໃນແຕ່ລະໄລຍະຂອງ ສປປລາວ ແລະ ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງຕົນ; ການປະຕິບັດກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ໂດຍຕິດພັນກັບກົດໝາຍອື່ນ ເປັນຕົ້ນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍອື່ນທີ່ກ່ຽວຂ້ອງ ໄດ້ເຮັດໃຫ້ກົດໝາຍສັກສິດ; ຄວາມຮັບຮູ້-ເຂົ້າ ໃຈກ່ຽວກັບການປົກຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ, ສະຕິເຄົາລົບແລະປະຕິບັດກົດໝາຍທົ່ວສັງຄົມ ໄດ້ຮັບການເຊີດຊູສູງຂຶ້ນຢ່າງບໍ່ຢຸດຢັ້ງ.

# 3 ອົງການຈັດຕັ້ງມະຫາຊົນ ທັດສະນະສຶກສາ ແລະ ທ່ຽວຊົມສະຖານທີ່ປະຫວັດສາດ



(ສພຊ)-ວັນທີ 16 ທັນວາຜ່ານມາ, 3 ອົງການຈັດຕັ້ງມະຫາຊົນຂອງສະພາແຫ່ງຊາດ (ສພຊ) ໄດ້ຈັດຕັ້ງຂະບວນການທັດສະນະສຶກສາແລະທ່ຽວຊົມສະຖານທີ່ປະຫວັດສາດຂອງຊາດ, ຂອງພັກແລະການປະຕິວັດລາວ ໂດຍການນຳພາຂອງສະຫາຍອຳໄພ ຈິດມານົບ ຄະນະບໍລິຫານງານພັກ, ປະທານສະຫະພັນກຳມະບານ ສພຊ.

ຂະບວນການຄັ້ງນີ້ແມ່ນເນື່ອງໃນໂອກາດສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 49ປີ, ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 104 ປີ, ວັນໄຂອະນຸສອນສະຖານປະທານ ໄກສອນ ພົມວິຫານ ຄົບຮອບ 30ປີ(13/12/1994-13/12/2024) ແລະ ວັນໄຂອະນຸສອນສະຖານປະທານ ສຸພານຸວົງ ຄົບຮອບ 19 ປີ (30/11/2005 - 30/11/2024) ເພື່ອສະແດງເຖິງຄວາມເຄົາລົບ, ກະຕັນຍູຮູ້ບຸນຄຸນຕໍ່ຄຸນງາມຄວາມດີ ແລະ ຜົນງານອັນໃຫຍ່ຫຼວງຂອງປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ ແລະ ທ່ານ ໜູຮັກ ພູມສະຫວັນ ທີ່ໄດ້ອຸທິດຕະຫຼອດຊີວິດຂອງຕົນໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ແນໃສ່ສຶກສາອົບຮົມ, ຮ່ຳຮຽນເອົາແບບຢ່າງຄຸນສົມບັດສົມທຳປະຕິວັດທີ່ລ້ຳເລີດ, ແບບແຜນການດຳລົງຊີວິດທີ່ລຽບງ່າຍປອດໃສ, ແບບແຜນວິທີເຮັດວຽກທີ່ມີວິທະຍາສາດ ແລະ ແບບແຜນການນຳພາທີ່ສະຫຼາດສ່ອງໃສ.

ສະມາຊິກ 3 ອົງການຈັດຕັ້ງມະຫາຊົນຂອງ ສພຊ ໄດ້ທ່ຽວຊົມສະຖານທີ່ 4 ແຫ່ງຄື: ຫໍພິພິດທະພັນ ໄກສອນ ພົມວິຫານ, ອະນຸສອນສະຖານປະທານ ໄກສອນພົມວິຫານ, ອະນຸສອນສະຖານປະທານ ສຸພານຸວົງ ແລະ ອະນຸສອນສະຖານ ທ່ານ ໜູຮັກ ພູມສະຫວັນ.

**(ອານຸສອນ ພູມມີທອນ)**

# ກຳນົດເງິນເດືອນຕາມລະດັບສີມືແຮງງານ



(ສພຊ) - ຕອນເຊົ້າວັນທີ 6 ທັນວາຜ່ານມາ, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ທ່ານ ນາງ ໃບຄຳ ຂັດຕິຍະ ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການ-ສັງຄົມ ໄດ້ສະເໜີປັບປຸງກົດໝາຍວ່າດ້ວຍການພັດທະນາສີມືແຮງງານ ເຊິ່ງທ່ານລາຍງານໃຫ້ເຫັນເຖິງບັນດາອຸປະສັກ ແລະ ສິ່ງທ້າທາຍຈຳນວນບໍ່ໜ້ອຍ ເປັນຕົ້ນກຳລັງແຮງງານລາວ ສ່ວນຫຼາຍແມ່ນດຳລົງຊີວິດຢູ່ຊົນນະບົດເຮັດວຽກໃນຂົງເຂດກະສິກຳທີ່ປະສິດທິພາບແຮງງານຍັງຕ່ຳ, ຈຳນວນໜຶ່ງ ໄດ້ເຂົ້າເຮັດວຽກໃນພາກທຸລະກິດ ຫຼື ໂຮງຈັກໂຮງງານແຕ່ທັດສະນະຄະຕິໃນການເຮັດວຽກຍັງບໍ່ສູງ ເປັນຕົ້ນແມ່ນວິໄນ ຫຼື ການນັບຖືລະບຽບໃນການເຮັດວຽກຍັງບໍ່ເຂັ້ມງວດ, ບໍ່ເຂັ້ມງານ; ກຳລັງແຮງງານຈຳນວນໜຶ່ງ ອອກໄປເຮັດວຽກຢູ່ປະເທດໃກ້ຄຽງແບບບໍ່ຖືກຕ້ອງຕາມກົດໝາຍ; ກຳລັງແຮງງານສ່ວນຫຼາຍຍັງບໍ່ໄດ້ຮັບການເຝິກອົບຮົມດ້ານວິຊາຊີບ, ສີມື ແລະ ຍົກລະດັບສີມືແຮງງານຢ່າງເປັນລະບົບ, ມີປະສົບການເຮັດວຽກຫຼາຍ ແຕ່ບໍ່ໄດ້ຮັບການທົດສອບ ແລະ ຢັ້ງຢືນລະດັບສີມືແຮງງານ ຫຼື ຄຸນວຸດທິທາງວິຊາຊີບ ຈຶ່ງເຮັດໃຫ້ເສຍໂອກາດໃນການໄດ້ຮັບຜົນຕອບແທນ ຫຼື ຄ່າແຮງງານທີ່ເໝາະສົມ; ການກຳນົດລະດັບເງິນເດືອນ ຫຼື ຄ່າແຮງງານຂອງຫົວໜ່ວຍແຮງງານ ຍັງບໍ່ໄດ້ອີງໃສ່ໜ້າວຽກ ຫຼື ຕຳແໜ່ງງານຕົວຈິງ ແລະ ຍັງບໍ່ໄດ້ອີງໃສ່ລະດັບສີມືແຮງງານໃນຕຳແໜ່ງງານນັ້ນໆເທົ່າທີ່ຄວນ; ຜູ້ໃຊ້ແຮງງານຍັງບໍ່ມີການສະໜອງແຜນຄວາມຕ້ອງການນຳໃຊ້ແຮງງານຕາມໜ້າວຽກ ແລະ ຄວາມຊຳນານງານຂອງແຮງງານ, ເຮັດໃຫ້ຂະແໜງການຄຸ້ມຄອງການພັດທະນາສີມືແຮງງານ ຂາດຂໍ້ມູນສຳລັບການກະກຽມແລະເຝິກສີມືແຮງງານສະໜອງໃຫ້; ການປະກອບສ່ວນເຂົ້າໃນການພັດທະນາສີມືແຮງງານຂອງຫົວໜ່ວຍແຮງງານ, ໂຄງການລົງທຶນຕ່າງໆ ລວມທັງການມີສ່ວນຮ່ວມຂອງທົ່ວສັງຄົມເຫັນວ່າຍັງບໍ່ທັນແຂງແຮງ; ການແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງວຽກງານການສ້າງ ແລະ ພັດທະນາສີມືແຮງງານ ລະຫວ່າງພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກທຸລະກິດ ຍັງບໍ່ມີຄວາມຊັດເຈນ, ເຮັດວຽກຍັງແບບບໍ່ລວມສູນ ຂາດການປະສານງານກັນ ຫຼື ຕ່າງຝ່າຍຕ່າງປະຕິບັດ; ການລົງທຶນໃສ່ຂົງເຂດການພັດທະນາສີມືແຮງງານເຖິງວ່າໄດ້ເອົາໃຈໃສ່ ແຕ່ຖ້າທຽບໃສ່ຄວາມຕ້ອງການຕົວຈິງ ກໍຍັງເຫັນວ່າບໍ່ທັນສົມຄູ່ເປັນຕົ້ນແມ່ນພື້ນຖານໂຄງລ່າງຍັງອ່ອນນ້ອຍ, ວັດຖຸອຸປະກອນ, ເຄື່ອງຈັກ, ເຄື່ອງມືຮັບໃຊ້ການເຝິກ ຍັງບໍ່ພຽງພໍ, ຂາດແຄນທັງປະລິມານ ແລະ ຄຸນນະພາບຂອງຄູພັດທະນາສີມືແຮງງານ ແລະ ຄູທົດສອບ.

ຄາດຄະເນຜົນໄດ້ຮັບຈາກການປັບປຸງກົດໝາຍສະບັບນີ້, ທ່ານ ນາງ ໃບຄຳ ຂັດຕິຍະ ໃຫ້ຮູ້ວ່າ: ຈະເຮັດໃຫ້ການຄຸ້ມຄອງລັດດ້ວຍກົດໝາຍໃນດ້ານການພັດທະນາສີມືແຮງງານ ມີເຄື່ອງມືທີ່ໜັກແໜ້ນຂຶ້ນຕື່ມ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ, ການຕິດຕາມ, ກວດກາ ແລະ ຄຸ້ມຄອງວຽກງານການພັດທະນາສີມືແຮງງານຢ່າງເປັນລະບົບ, ມີຄວາມໂປ່ງໃສແລະຍຸຕິທຳ ໂດຍສະເພາະແມ່ນການກຳນົດບົດບາດ ແລະ ໜ້າທີ່ ຫຼື ຄວາມໝາຍຂອງວຽກງານການພັດທະນາສີມືແຮງງານ ແລະ ວຽກງານອາຊີວະສຶກສາ ໄດ້ແຈ້ງ ແລະ ຊັດເຈນຂຶ້ນ; ເຮັດໃຫ້ອົງການຈັດຕັ້ງລັດທຸກຂັ້ນ ລວມທັງອົງການປົກຄອງທ້ອງຖິ່ນ, ບັນດາຫົວໜ່ວຍທຸລະກິດ, ການຜະລິດ ແລະ ການບໍລິການຂອງທຸກພາກສ່ວນເສດຖະກິດ-ສັງຄົມ, ຜູ້ຕ້ອງການມີວຽກເຮັດງານທຳ ເຂົ້າໃຈ ແລະ ເຂົ້າຮ່ວມໃນວຽກງານການພັດທະນາສີມືແຮງງານຢ່າງເປັນລະບົບແລະຫຼາຍຂຶ້ນ; ຊຸກຍູ້ສົ່ງເສີມການພັດທະນາກຳລັງແຮງງານຕອບສະໜອງໃຫ້ແກ່ຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມພ້ອມທັງປັບປຸງກົນໄກການປະສານງານຮ່ວມມືລະຫວ່າງຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີຄວາມຊັດເຈນ ແລະ ຈະແຈ້ງຂຶ້ນ; ເຮັດໃຫ້ຜູ້ປະກອບການ, ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ມີຄວາມໝັ້ນໃຈ ແລະ ຫັນມາລົງທຶນໃນ ສປປລາວ ຫຼາຍຂຶ້ນເຊິ່ງຈະເປັນການດຶງດູດການລົງທຶນ; ຮັບປະກັນການນຳໃຊ້ແຮງງານທີ່ມີຄຸນນະພາບ, ມີຄວາມປອດໄພເປັນມິດກັບສິ່ງແວດລ້ອມ ແລະ ມີຜົນຜະລິດທີ່ມີລັກສະນະແຂ່ງຂັນໄດ້ກັບສາກົນ; ປະກອບສ່ວນສຳຄັນໃນການພັດທະນາເສດຖະກິດ-ສັງຄົມ, ເພີ່ມປະສິດທິພາບຂອງການຜະລິດ, ມີວຽກເຮັດງານທຳ, ຍົກສູງຄຸນນະພາບຊີວິດຂອງປະຊາຊົນ; ສ້າງຄວາມເຊື່ອໝັ້ນໃຫ້ອົງການຈັດຕັ້ງສາກົນຕໍ່ກັບລະບົບການພັດທະນາສີມືແຮງງານ, ການປົກປ້ອງ ແລະ ສົ່ງເສີມສິດ ແລະ ຜົນປະໂຫຍດຂອງແຮງງານລາວ; ມີນິຕິກຳທີ່ເປັນບ່ອນອີງໃນການທົດສອບ, ຢັ້ງຢືນສີມືແຮງງານຕາມລະດັບຕ່າງໆ ທັງເປັນບ່ອນອີງໃຫ້ແກ່ການກຳນົດເງິນເດືອນ, ຄ່າແຮງງານຂອງແຮງງານລາວ, ແຮງງານຕ່າງປະເທດ ທີ່ມາເຮັດວຽກຢູ່ ສປປລາວ ຢ່າງສະເໝີພາບຕາມລະດັບສີມືແຮງງານ.

# ປັບປຸງກົດໝາຍການພັດທະນາ ແລະ ປົກປ້ອງແມ່ຍິງ ໃຫ້ແທດເໝາະກັບສະພາບການ

(ສພຊ) - ຕອນເຊົ້າວັນທີ 10 ທັນວານີ້, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ທ່ານ ນາງ ອາລີ ວົງໜໍ່ບຸນທຳ ປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ໄດ້ສະເໜີປັບປຸງກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, ເຊິ່ງຜ່ານການທົບທວນແລະປະເມີນການຈັດຕັ້ງປະຕິບັດກົດໝາຍ ເຫັນວ່າຍັງມີບາງດ້ານບໍ່ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ເປັນຕົ້ນ: ເນື້ອໃນກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ມີລັກສະນະກວມລວມ, ສັ້ນກະທັດຮັດ ເຮັດໃຫ້ມີຄວາມຊັກຊ້າ ແລະ ຫຍຸ້ງຍາກໃນການຈັດຕັ້ງປະຕິບັດ; ສະພາບການໃນພາກພື້ນ ແລະ ສາກົນ ມີການປ່ຽນແປງ ລວມທັງການພັດທະນາເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຢ່າງວ່ອງໄວ, ປາກົດການຫຍໍ້ທໍ້ໃນສັງຄົມມີຫຼາຍອັນໃໝ່ເກີດຂຶ້ນ ມີສິ່ງທ້າທາຍຫຼາຍປະການ, ສະນັ້ນກົດໝາຍກໍມີຄວາມຈຳເປັນຕ້ອງໄດ້ຮັບການປັບປຸງໃຫ້ແທດເໝາະກັບສະພາບການຕົວຈິງໃນໄລຍະໃໝ່ນີ້; ບາງມາດຕະການທາງອາຍາທີ່ກຳນົດໄວ້ໃນກົດໝາຍສະບັບນີ້ ບໍ່ສອດຄ່ອງກັບປະມວນກົດໝາຍອາຍາ; ມີຄວາມຈຳເປັນຕ້ອງໄດ້ເພີ່ມຕື່ມບາງເນື້ອໃນ ແລະ ປັບປຸງໃຫ້ສອດຄ່ອງ; ພາລະບົດບາດ ແລະ ຂັ້ນຕອນໃນການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍລາວບັນ



ດາເຜົ່າຂອງການຈັດຕັ້ງສະຫະພັນແມ່ຍິງ ຍັງບໍ່ທັນລະອຽດເທົ່າທີ່ຄວນ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຕົວຈິງຢູ່ທ້ອງຖິ່ນມີຄວາມຫຍຸ້ງຍາກ.

ທ່ານ ນາງ ອາລີ ວົງໜໍ່ບຸນທຳ ໃຫ້ຮູ້ວ່າ: ພາຍຫຼັງຮ່າງກົດໝາຍສະບັບນີ້ໄດ້ຮັບການຮັບຮອງຈະເຮັດໃຫ້ມີບ່ອນອີງດ້ານນິຕິກຳ ໃນການຄຸ້ມຄອງ, ຕິດຕາມກວດກາການເຄື່ອນໄຫວວຽກງານພັດທະນາ ແລະ ປົກປ້ອງແມ່ຍິງໄດ້ເປັນຢ່າງດີ ທັງເປັນການຍົກສູງບົດບາດການຈັດຕັ້ງສະຫະພັນແມ່ຍິງລາວ ສູງຂຶ້ນແລະ ເຮັດໃຫ້ແມ່ຍິງໄດ້ຮັບການພັດທະນາ, ປົກປ້ອງ ແລະ ຊ່ວຍເຫຼືອຈາກການຈັດຕັ້ງທີ່ກ່ຽວຂ້ອງທັງພາກລັດ ແລະເອກະຊົນເພື່ອປະກອບສ່ວນໃນການແກ້ໄຂປາກົດການຫຍໍ້ທີ່ເກີດຂຶ້ນກັບເອື້ອຍນ້ອງແມ່ຍິງ.

# ຜູ້ແທນລາວ ເຂົ້າຮ່ວມກອງປະຊຸມ ຄວາມໝັ້ນຄົງທາງດ້ານສຸຂະພາບໂລກ




(ສພຊ) - ໃນວັນທີ 02-03 ທັນວາ 2024 ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ເຂົ້າຮ່ວມກອງປະຊຸມລັດຖະສະພາພາກພື້ນອາຊີ-ປາຊີຟິກວ່າດ້ວຍຄວາມໝັ້ນຄົງທາງດ້ານສຸຂະພາບໂລກ, ທີ່ນະຄອນຫຼວງບາງກອກ, ລາຊະອານາຈັກໄທ; ກອງປະຊຸມດັ່ງກ່າວ ຈັດຂຶ້ນເປັນຄັ້ງທຳອິດໃນພາກພື້ນອາຊີ-ປາຊີຟິກພາຍໃຕ້ການຮ່ວມມືລະຫວ່າງລັດຖະສະພາແຫ່ງລາຊະອານາຈັກໄທ, ສະຫະພັນລັດຖະສະພາສາກົນ (IPU) ແລະ ອົງການອະນາໄມໂລກ (WHO) ໂດຍມີສະມາຊິກລັດຖະສະພາຈາກພາກພື້ນອາຊີ-ປາຊີຟິກ, ເລຂາ ທິການໃຫຍ່ IPU ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມໄດ້ປຶກສາຫາລືກັນກ່ຽວກັບສິ່ງທ້າທາຍທາງດ້ານສຸຂະພາບ ໂດຍສະເພາະແມ່ນຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ໃນໄລຍະຜ່ານມາ, ການຍົກສູງບົດບາດຂອງລັດຖະສະພາໃນການຮັບປະກັນຄວາມປອດໄພທາງດ້ານສຸຂະພາບ, ຄວາມເປັນຜູ້ນຳຂອງລັດຖະສະພາ ໃນການສ້າງຄວາມເຊື່ອໝັ້ນ ແລະ ຄວາມສາມັກຄີທົ່ວສັງຄົມ, ການສ້າງຄວາມເຂັ້ມແຂງທາງດ້ານສຸຂະພາບຜ່ານການປະກອບສ່ວນຂອງທຸກພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ໄດ້ມີຄຳເຫັນແລກປ່ຽນ ໂດຍຍົກໃຫ້ເຫັນເຖິງສິ່ງທ້າທາຍທາງດ້ານສຸຂະພາບທີ່ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ການດຳລົງຊີວິດຂອງປະຊາຊົນທົ່ວໂລກ, ຜົນກະທົບຂອງການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ຍັງສົ່ງຜົນຕໍ່ການພັດທະນາເສດຖະກິດ

ອ່ານຕໍ່ໜ້າ 6

# ຈະຂຶ້ນທະບຽນທຸກລັກສະນະຂອງທີ່ຢູ່ອາໄສ



(ສພຊ) - ຕອນເຊົ້າວັນທີ 9 ທັນວານີ້, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ທ່ານ ງາມປະສົງ ເມືອງມະນີ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ສະເໜີສ້າງກົດໝາຍວ່າດ້ວຍທີ່ຢູ່ອາໄສ ເຊິ່ງຜ່ານການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງວຽກງານທີ່ຢູ່ອາໄສໃນໄລຍະຜ່ານມາເຫັນວ່າຍັງພົບຄວາມຫຍຸ້ງຍາກແລະມີຫຼາຍບັນຫາ, ຈຶ່ງເປັນເຫດຜົນ ແລະ ຄວາມຈຳເປັນໃນການສ້າງຮ່າງກົດໝາຍສະບັບນີ້ ເປັນຕົ້ນບໍ່ທັນມີກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຄຸ້ມຄອງສະເພາະກ່ຽວກັບວຽກງານທີ່ຢູ່ອາໄສ; ທີ່ຢູ່ອາໄສຍັງບໍ່ທັນມີການຂຶ້ນທະບຽນ, ເກັບກຳຂໍ້ມູນສະຖິຕິ, ສ້າງຖານຂໍ້ມູນທີ່ຢູ່ອາໄສ ເພື່ອຄຸ້ມຄອງໃຫ້ເປັນລະບົບ, ລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ທັງເພື່ອເປັນພື້ນຖານໃຫ້ແກ່ລັດໃນການສ້າງນະໂຍບາຍ, ການຊຸດຄົ້ນແຫຼ່ງລາຍຮັບຕາມຄວາມເໝາະສົມ ແລະ ສອດຄ່ອງໃນແຕ່ລະໄລຍະ; ທີ່ຢູ່ອາໄສຈຳນວນໜຶ່ງ ຍັງບໍ່ທັນໄດ້ມາດຕະຖານເຕັກນິກ, ບໍ່ທັນມີລະບົບສຸຂາພິບານທີ່ດີ ແລະ ຍັງຂາດພື້ນຖານໂຄງລ່າງທາງດ້ານເຕັກນິກ ແລະ ສັງຄົມ, ສິ່ງອຳນວຍຄວາມສະດວກຕ່າງໆ; ນອກຈາກນັ້ນ, ຍັງບໍ່ທັນມີກົນໄກການຄຸ້ມຄອງວຽກງານທີ່ຢູ່ອາໄສ.

ທ່ານ ງາມປະສົງ ເມືອງມະນີ ກ່າວຕື່ມອີກວ່າ: ເມື່ອຮ່າງກົດໝາຍວ່າດ້ວຍທີ່ຢູ່ອາໄສ ຜ່ານການຮັບຮອງຈາກສະພາແຫ່ງຊາດ ຈະກາຍເປັນເຄື່ອງມືໃຫ້ແກ່ການຄຸ້ມຄອງວຽກງານທີ່ຢູ່ອາໄສໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເຮັດໃຫ້ການຄຸ້ມຄອງ, ຕິດຕາມກວດກາ ແລະ ການແບ່ງຄວາມຮັບຜິດຊອບກ່ຽວກັບວຽກງານທີ່ຢູ່ອາໄສ ລະຫວ່າງສູນກາງ, ທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງເປັນລະບົບ, ລວມສູນ ແລະເປັນເອກະພາບໃນຂອບເຂດທົ່ວປະເທດ; ການຂຶ້ນທະບຽນທີ່ຢູ່ອາໄສ ຈະຂຶ້ນທະບຽນທຸກລັກສະນະຂອງທີ່ຢູ່ອາໄສ ແຕ່ຈະເສຍຄ່າທຳນຽມແລະຄ່າບໍລິການແມ່ນທີ່ຢູ່ອາໄສຖາວອນເທົ່ານັ້ນ, ສ່ວນທີ່ຢູ່ອາໄສເຄິ່ງຖາວອນແລະບໍ່ຖາວອນ ແມ່ນຍົກເວັ້ນ; ລະບົບຖານຂໍ້ມູນໃນການຂຶ້ນທະບຽນທີ່ຢູ່ອາໄສ ແມ່ນກະຊວງໂຍທາທິການ ແລະ ຂົນສົ່ງ ຈະປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ ໃນການກຳນົດລະບົບເລກລະຫັດການຂຶ້ນທະບຽນ; ເປັນເຄື່ອງມືທີ່ສຳຄັນໃນການຄຸ້ມຄອງລັດດ້ວຍກົດໝາຍ, ປະກອບສ່ວນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ ທັງເປັນການຊຸກຍູ້, ສົ່ງເສີມໃຫ້ປະຊາຊົນປຸກສ້າງ, ຕໍ່ເຕີມທີ່ຢູ່ອາໄສໂດຍຖືກຕ້ອງຕາມກົດໝາຍ ແລະ ລະບຽບການ; ຍົກລະດັບທີ່ຢູ່ອາໄສໃຫ້ໄດ້ມາດຕະຖານ, ມີລະບົບສຸຂາພິບານ ແລະ ສິ່ງແວດລ້ອມທີ່ດີ; ຊຸກຍູ້, ສົ່ງເສີມໃຫ້ພາກສ່ວນເອກະຊົນທັງພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມໃນການພັດທະນາວຽກງານທີ່ຢູ່ອາໄສ ແລະ ດຶງດູດການຮ່ວມມື, ການຊ່ວຍເຫຼືອຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາ ແລະສະຖາບັນການເງິນໃນວຽກງານການພັດທະນາທີ່ຢູ່ອາໄສ; ຮັບປະກັນການຈັດຕັ້ງປະຕິບັດວຽກງານທີ່ຢູ່ອາໄສໃຫ້ມີຄວາມຄ່ອງຕົວ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ປະຊາຊົນ ແລະ ຜູ້ດຳເນີນທຸລະກິດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

# ຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມກອງປະຊຸມ AIPA-FAO ຄັ້ງທີ 3



(ສພຊ) - ທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມການຈັດຕັ້ງປະຕິບັດຂໍ້ແນະນຳຂອງອາຊຽນ ວ່າດ້ວຍການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນຂະແໜງການອາຫານ, ກະສິກຳ ແລະ ປ່າໄມ້ (AIPA-FAO) ຄັ້ງທີ 3 ພາຍໃຕ້ຫົວຂໍ້ "ການນຳລັດຖະສະພາ ແລະ ການເປັນຄູ່ຮ່ວມການລົງທຶນແບບຍືນຍົງ ໃນຂະແໜງການອາຫານ, ກະສິກຳ ແລະ ປ່າໄມ້" ທີ່ຈັດຂຶ້ນໃນວັນທີ 10-13 ທັນວາ 2024 ທີ່ຈາກາຕາ, ປະເທດອິນໂດເນເຊຍ; ກ່າວເປີດກອງປະຊຸມຢ່າງເປັນທາງການ ໂດຍທ່ານ ນາງ ຊິຕິ ໂຣໄຊເມຣິຢັນຕີ ດາໂຕະ ຮາຈິ ອັບດຸນ ຣາມັນ (Siti Rozaimeriyanty Dato Haji Abdul Rahman) ເລຂາທິການໃຫຍ່ໄອປາ, ມີທ່ານ ນາງ ເທຣຸມິ ໂອນຸມະ (Terumi Onuma) ຜູ້ຮັບຜິດຊອບການລົງທຶນທາງດ້ານກະສິກຳຢ່າງມີຄວາມຮັບຜິດຊອບ ປະຈຳອົງການ FAO ແລະ ສະມາຊິກລັດຖະສະພາຈາກບັນດາປະເທດສະມາຊິກອາຊຽນເຂົ້າຮ່ວມ.

ຈຸດປະສົງຕົ້ນຕໍຂອງກອງປະຊຸມດັ່ງກ່າວນີ້ແມ່ນເພື່ອວາງພື້ນຖານສຳລັບການນຳໃຊ້ຂໍ້ແນະນຳຂອງອາຊຽນ(ASEANRAI) ໃຫ້ເປັນຂອບໃນການຈັດຕັ້ງປະຕິບັດ ໂດຍກຳນົດໃຫ້ບັນດາສະມາຊິກລັດຖະສະພາໄອປາ ຕິດ

ອ່ານຕໍ່ໜ້າ 6

# ກວທສ ພົບປະສອງຝ່າຍກັບສະພາທີ່ປຶກສາການເມືອງເຂດປົກຄອງຕົນເອງກວາງຊີຈ້ວງ



(ສພຊ) - ວັນທີ 5 ທັນວານີ້ທີ່ສະພາແຫ່ງຊາດ, ສະຫາຍ ບຸນຕາ ເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ໄດ້ພົບປະກັບສະຫາຍ ເຝີຍ ຈື້ຢົງ ຮອງປະທານສະພາທີ່ປຶກສາການເມືອງເຂດປົກຄອງຕົນເອງກວາງຊີຈ້ວງ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ລະຫວ່າງວັນທີ 3-6 ທັນວາ 2024 ເຊິ່ງເປັນການປະກອບສ່ວນຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ເປັນຮູບປະທຳ ແລະ ນຳເອົາຜົນປະໂຫຍດສູງສຸດມາສູ່ປະຊາຊົນສອງຊາດ.

ໃນການພົບປະ, ສອງຝ່າຍໄດ້ແຈ້ງສະພາບການທີ່ພົ້ນເດັ່ນຂອງປະເທດ ແລະ ການເຄື່ອນໄຫວວຽກງານຂອງສອງຝ່າຍ ທັງແລກປ່ຽນຄຳຄິດຄຳເຫັນ, ບົດຮຽນໃນການປະຕິບັດພາລະບົດບາດຂອງສະພາທີ່ປຶກສາການເມືອງເຂດປົກຄອງຕົນເອງກວາງຊີຈ້ວງ ກໍຄືວຽກງານການສຶກສາ, ວິທະຍາສາດ, ສຸຂະພາບ, ກິລາ ແລະ ບັນຫາອື່ນໆ ພ້ອມທັງຮ່ວມກັນຕີລາຄາສູງຕໍ່ຜົນຂອງການເຄື່ອນໄຫວເຮັດວຽກຂອງຄະນະຈາກສະພາທີ່ປຶກສາການເມືອງເຂດປົກຄອງຕົນເອງກວາງຊີຈ້ວງ ຢູ່ແຂວງຫຼວງພະບາງ ໂດຍສະເພາະການລົງນາມໃນຂໍ້ຕົກລົງຂອບການຮ່ວມມືສາມຝ່າຍລະຫວ່າງມະຫາວິທະຍາໄລວິທະຍາສາດ ແລະ ເຕັກໂນໂລຊີກຸ້ຍຫຼິນ, ສະຖາບັນເຕັກໂນໂລຊີແຂວງຫຼວງນ້ຳທາ ແລະ ບໍລິສັດ Laos Spacetime Information Intelligent Location Services Technology Co. LTD ເພື່ອຮ່ວມກັນສ້າງ "ໂຄງການຄົ້ນຄວ້າຈີນ-ອາຊຽນລາວ" ສູນຂໍ້ມູນເວລາອາວະກາດ ແລະ ບໍລິການສະຖານທີ່ອັດສະລິຍະ ເຊິ່ງຈະເປັນບາດກ້າວທີ່ສຳຄັນໃນການສົ່ງເສີມ ແລະ ພັດທະນາການສຶກສາຢູ່ ສປປລາວ. ນອກນີ້, ຍັງໄດ້ສົນທະນາແລກປ່ຽນບົດຮຽນກ່ຽວກັບວຽກງານອາຊີວະສຶກສາ ເພື່ອເສີມຂະຫຍາຍການຮ່ວມມືໃນວຽກງານອາຊີວະສຶກສາ, ການສົ່ງເສີມການສຶກສາພາສາຈີນ ແລະ ສ້າງສາຍພົວພັນຮ່ວມມືໃນຂົງເຂດອື່ນທີ່ມີທ່າແຮງ ລະຫວ່າງລາວ-ຈີນ, ຈີນ-ລາວເປັນການປະກອບສ່ວນສຳຄັນໃນການຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ເປັນຮູບປະທຳ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ສຳລັບທິດທາງໃນຕໍ່ໜ້າ, ສອງຝ່າຍເຫັນດີສືບຕໍ່ເປັນເສນາທິການໃຫ້ແກ່ອົງການຈັດຕັ້ງຂອງຕົນ ໃນການຊຸກຍູ້ແລະສົ່ງເສີມໃຫ້ລັດຖະບານຂອງສອງປະເທດ ຈັດຕັ້ງປະຕິບັດບັນດາຂໍ້ຕົກລົງສັນຍາ, ອະນຸສັນຍາແລະບົດບັນທຶກຄວາມເຂົ້າໃຈຕ່າງໆທີ່ສອງຝ່າຍໄດ້ລົງນາມຮ່ວມກັນໃຫ້ເປັນຮູບປະທຳ ແລະ ນຳເອົາປະໂຫຍດມາສູ່ປະຊາຊົນຢ່າງແທ້ຈິງ; ໃຫ້ມີການຮ່ວມມືລະຫວ່າງສະພາທີ່ປຶກສາການເມືອງ, ຄະນະກຳມະການການສຶກສາ, ວິທະຍາສາດ, ສຸຂະພາບ ແລະ ກິລາ ຂອງເຂດປົກຄອງຕົນເອງກວາງຊີຈ້ວງກັບສະພາແຫ່ງຊາດແຫ່ງ ສປປລາວຕາງໜ້າໂດຍກວທສ ແລະ ສະຖາບັນຄົ້ນຄວ້ານິຕິກຳຂອງສະພາແຫ່ງຊາດ ເພື່ອສືບຕໍ່ຮ່ວມມືແລກປ່ຽນບົດຮຽນແລະປະສົບການນຳກັນ ໃນວຽກງານການສຶກສາ, ສາທາລະນະສຸກ ແລະ ການສ້າງນິຕິກຳ; ສືບຕໍ່ອຳນວຍຄວາມສະດວກ ແລະ ໃຫ້ການສະໜັບສະໜູນຊ່ວຍເຫຼືອໃນການເຝິກອົບຮົມ ແລະ ກໍ່ສ້າງພະນັກງານ ໄລຍະສັ້ນ ແລະ ໄລຍະຍາວ; ພ້ອມທັງຊຸກຍູ້ໃຫ້ມີການພົວພັນຮ່ວມມືກັນຫຼາຍຂຶ້ນລະຫວ່າງກະຊວງສຶກສາທິການ ແລະກິລາ, ກະຊວງສາທາລະນະສຸກ ຂອງ ສປປລາວ ກັບ ພາກສ່ວນທີ່ຮັບຜິດຊອບວຽກງານການສຶກສາ ແລະ ສາທາລະນະສຸກ ຂອງເຂດປົກຄອງຕົນເອງກວາງຊີຈ້ວງ ໂດຍສະເພາະໃນໂຄງການພັດທະນາຊັບພະຍາກອນມະນຸດ.

ນອກນັ້ນ, ສະຫາຍເຝີຍ ຈື້ຢົງ ພ້ອມດ້ວຍຄະນະ ຍັງໄດ້ເຂົ້າຢ້ຽມຂໍ່ານັບສະຫາຍ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ພົບປະ ແລະ ເຮັດວຽກກັບສະຫາຍເອກອັກຄະລັດຖະທູດ ສປຈີນ ປະຈຳ ສປປລາວ ແລະຄະນະອະທິການບໍດີ, ຄູ, ອາຈານ ມະຫາວິທະຍາໄລແຫ່ງຊາດລາວເພື່ອສົ່ງເສີມຊຸກຍູ້ການແລກປ່ຽນດ້ານການສຶກສາ ລະຫວ່າງມະຫາວິທະຍາໄລແຫ່ງຊາດລາວ ແລະ ມະຫາວິທະຍາໄລກວາງຊີ; ຢ້ຽມຊົມຫໍພິພິທະພັນສິລະປະລາວ, ສູນຝຶກອົບຮົມພາສາຈີນໜີແຜນດາແລະສະຖານທີ່ສຳຄັນຢູ່ນະຄອນຫຼວງວຽງຈັນຕື່ມອີກ.

# ເຝິກອົບຮົມການເປັນເລຂາການນຳທີ່ດີ

(ສພຊ)-ວັນທີ 14-15 ທັນວາຜ່ານມາ ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ມີກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງກ່ຽວກັບການເປັນເລຂາການນຳທີ່ດີ ໃຫ້ແກ່ບັນດາເລຂານຸການການນຳຂອງສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ ໂດຍການເຂົ້າຮ່ວມໂອ້ລົມຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ເຊິ່ງມີວິທະຍາກອນຈາກຫ້ອງວ່າການສູນກາງພັກ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ 120 ກວ່າທ່ານ.



ທ່ານ ສິງຄຳ ວົງພະຈັນ ໄດ້ກ່າວເປີດກອງປະຊຸມວ່າ: ການເຝິກອົບຮົມຄັ້ງນີ້ ເພື່ອບຳລຸງດ້ານທິດສະດີ ແລະ ບົດຮຽນຕົວຈິງ, ເສີມສ້າງທັກສະບຸກຄະລິກກະພາບ ໃຫ້ແກ່ພະນັກງານທີ່ກຳລັງປະຕິບັດໜ້າທີ່ເປັນເລຂານຸການການນຳຂອງສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ເພື່ອປະກອບສ່ວນເຮັດໜ້າທີ່ວຽກງານທີ່ຕົນເອງຮັບຜິດຊອບໃຫ້ມີຄວາມສົມບູນ ແລະ ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການໃນໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ ໃຫ້ໄດ້ຮັບຜົນດີ, ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ; ເປີດໂອກາດໃຫ້ບັນດາເລຂານຸການການນຳທີ່ຢູ່ທັງສູນກາງ ແລະ ທ້ອງຖິ່ນໄດ້ຮຽນຮູ້ສິ່ງໃໝ່ຈາກບັນດາວິທະຍາກອນທີ່ມີປະສົບການ, ມີຄວາມຮູ້ຄວາມສາມາດ ທັງເປັນການແລກປ່ຽນບົດຮຽນ ແລະ ປະສົບການຈາກສຳມະນາກອນດ້ວຍກັນ.

ບັນດາຜູ້ເຂົ້າຮ່ວມໄດ້ຮັບຟັງບົດຮຽນໃນການຮ່າງເອກະສານທາງການ ເຊັ່ນ: ຮ່າງບົດຄຳເຫັນ, ຮ່າງບົດໂອ້ລົມ, ຮ່າງບົດປະກອບຄຳເຫັນ ແລະ ວຽກສຳຄັນໃດໜຶ່ງ ແລະ ບາງບົດຮຽນໃນການເປັນເລຂານຸການການນຳ; ຈາກນັ້ນ, ໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບໃນການຄົ້ນຄວ້າແລະແລກປ່ຽນປະກອບຄວາມຄິດເຫັນຢ່າງກົງໄປກົງມາ ເພື່ອໃຫ້ມີຄວາມຮູ້ດ້ານທິດສະດີ ແລະ ບົດຮຽນຕົວຈິງ ທີ່ນັບມື້ຍິ່ງມີຄວາມຮຽກຮ້ອງຕ້ອງການໃນການເພີ່ມຄວາມຮູ້ໃຫ້ຫຼາຍຂຶ້ນ ຈົນກ້າວໄປເຖິງຄວາມຊຳນານງານ ເພື່ອຮັບໃຊ້ການນຳຂັ້ນສູງໃຫ້ມີປະສິດທິຜົນຍິ່ງຂຶ້ນ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ມີຄຳຄິດຄຳເຫັນເນັ້ນໜັກໃຫ້ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ມີຄວາມອົດທົນເສຍສະຫຼະ-ດຸໝັ່ນ, ບຸກບືນຫ້າວຫັນ, ເອົາໃຈໃສ່ຄົ້ນຄວ້າຮ່ຳຮຽນ, ກຳແໜ້ນແນວທາງນະໂຍບາຍ ກົດໝາຍ ລະບຽບການຕ່າງໆ, ມີມະນຸດສຳພັນດີໃນການປະສານງານ, ການປະຕິບັດວຽກງານຄ່ອງແຄ້ວນິ້ມນວນຫ້າວຫັນວ່ອງໄວຊັດເຈນ, ມີສະຕິປະຕິບັດກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ, ບໍ່ສວຍໃຊ້ໜ້າທີ່ຂອງການນຳຫາຜົນປະໂຫຍດ; ເອົາໃຈໃສ່ປັບປຸງ ຫຼື ປະຕິບັດລະບອບແບບແຜນວິທີເຮັດວຽກ, ຍົກລະດັບຄວາມຮູ້ຮອບດ້ານ, ຍົກສູງຄຸນນະພາບໃນການປະສານງານ ແລະ ການຮັກສາຄວາມລັບ.

**(ນາງ ອາລິນ ສຸພົມມະປະດິດ)**



## ຜູ້ແທນລາວ...

(ຕໍ່ຈາກໜ້າ 4)

ຂອງ ສປປລາວ ຈົນຮອດປັດຈຸບັນ; ພ້ອມນັ້ນ, ຍັງຍົກໃຫ້ເຫັນເຖິງການຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດລາວ ໃນການຮັບຮອງເອົາກົດໝາຍຫຼາຍສະບັບ ທີ່ເປັນການຮັບປະກັນທາງດ້ານສຸຂະພາບທົ່ວສັງຄົມເຊັ່ນ: ກົດໝາຍວ່າດ້ວຍສາທາລະນະສຸກ, ກົດໝາຍວ່າດ້ວຍການໃຫ້ວັກຊີນກັນພະຍາດ, ກົດໝາຍວ່າດ້ວຍການປິ່ນປົວ, ກົດໝາຍວ່າດ້ວຍການອະນາໄມ ແລະສົ່ງເສີມສຸຂະພາບ, ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເອັດຈ໌ໄອວີ/ພະຍາດເອດ, ກົດໝາຍວ່າດ້ວຍການປະກັນສັງຄົມ, ກົດໝາຍວ່າດ້ວຍການປະກັນສຸຂະພາບ, ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່, ກົດໝາຍວ່າດ້ວຍການຮັກສາສຸຂະພາບຂັ້ນຕົ້ນ. ນອກນັ້ນ, ທ່ານຍັງຮຽກຮ້ອງໃຫ້ສະມາຊິກລັດຖະສະພາ ເພີ່ມທະວີການຮ່ວມມືທາງດ້ານນິຕິບັນຍັດ ເພື່ອຮັບປະກັນຄວາມປອດໄພທາງດ້ານສຸຂະພາບ, ສົ່ງເສີມການພັດທະນາການນຳໃຊ້ລະບົບດິຈິຕອນ ເຂົ້າສູ່ວຽກງານສາທາລະນະສຸກ, ສົ່ງເສີມການປະກອບສ່ວນທັງພາກລັດ ແລະ ເອກະຊົນ, ການແລກປ່ຽນປະສົບການໃນລະດັບພາກພື້ນ ແລະ ສາກົນ ໂດຍສະເພາະການຮັບປະກັນການປົກຄຸມສຸຂະພາບທົ່ວປວງຊົນ (UHC) ເຊິ່ງເນັ້ນເຖິງລະບົບປະກັນສຸຂະພາບ, ຜົນກະທົບການປ່ຽນແປງດິນຟ້າອາກາດ ແລະ ການນຳໃຊ້ປັນຍາປະດິດ (AI) ເຂົ້າໃນວຽກງານສາທາລະນະສຸກໃນຍຸກອຸດສາຫະກຳ 4.0 ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດ ຕາມເປົ້າໝາຍທີ 3 “ຮັບປະກັນສຸຂະພາບທີ່ດີ ແລະ ສົ່ງເສີມຊີວິດການເປັນຢູ່ທີ່ດີຂອງທຸກຄົນ ແລະ ທຸກເກນອາຍຸ” ໃນປີ 2030.

# ທະນາຄານກາງ ສະເໜີປັບປຸງກົດໝາຍ

(ສພຊ) - ຕອນເຊົ້າວັນທີ 03 ທັນວາຜ່ານມາ, ກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາແຫ່ງຊາດຊຸດທີ IX ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພແຫ່ງຊາດ, ທ່ານ ນາງ ວັດທະນາດາລາ ລອຍຮັກສາການຜູ້ວ່າການທະນາຄານແຫ່ງສປປລາວ ໄດ້ລາຍງານກ່ຽວກັບຄວາມຈຳເປັນໃນການປັບປຸງກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປລາວເຊິ່ງທ່ານລາຍງານໃຫ້ຮູ້ວ່າ: ການປັບປຸງກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປລາວ ແມ່ນຕິດພັນວາລະແຫ່ງຊາດ ເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເຊິ່ງທະນາຄານແຫ່ງ ສປປລາວໄດ້ເລີ່ມຄົ້ນຄວ້າແຕ່ທ້າຍປີ 2023 ໂດຍດຳເນີນຕາມຂັ້ນຕອນຂອງກົດໝາຍວ່າດ້ວຍການສ້າງນິຕິກຳ ເປັນຕົ້ນການກຳນົດທິດທາງໃນການປັບປຸງກົດໝາຍ, ການສຶກສາຄົ້ນຄວ້ານິຕິກຳທີ່ຕິດພັນ ແລະ ບົດຮຽນຂອງປະເທດອ້ອມຂ້າງ ເຊັ່ນ:ຫວຽດນາມ,ກຳປູເຈຍ,ຈີນ, ສິງກະໂປ ແລະ ໄທ ພ້ອມທັງທາບທາມຄວາມເຫັນເປີດກວ້າງ ຢູ່ພາກເໜືອ, ພາກກາງ ແລະ ພາກໃຕ້ເຊິ່ງມີຜູ້ເຂົ້າຮ່ວມ210 ທ່ານ; ຈາກນັ້ນ, ໄດ້ສະເໜີຕໍ່ກອງປະຊຸມລັດຖະບານໃນເດືອນສິງຫາ 2024 ແລະ ໃນເດືອນກັນຍາ ກໍໄດ້ເຮັດວຽກຮ່ວມກັບກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ໃນການກວດກາເນື້ອໃນຮອບດ້ານຕໍ່ຮ່າງກົດໝາຍສະບັບດັ່ງກ່າວ ແລະນຳເອົາຮ່າງກົດໝາຍສະເໜີຕໍ່ກອງປະຊຸມ ຍົກສູງຄຸນນະພາບທາງດ້ານເນື້ອໃນໃນກາງເດືອນພະຈິກຜ່ານມາ ເພື່ອທາບທາມຄຳເຫັນນຳບັນດາທ່ານສະມາຊິກສະພາແຫ່ງຊາດ.



ທ່ານ ນາງ ວັດທະນາ ດາລາລອຍ ກ່າວຕື່ມວ່າ: ພາຍຫຼັງກົດໝາຍສະບັບນີ້ໄດ້ຮັບການປັບປຸງ ແລະ ປະກາດໃຊ້, ຄາດວ່າຈະມີຜົນໄດ້ຮັບຄື: ເຮັດໃຫ້ມີບ່ອນອີງດ້ານນິຕິກຳທີ່ໜັກແໜ້ນ ໃນການຈັດຕັ້ງປະຕິບັວຽກງານຂອງທະນາຄານ ແຫ່ງ ສປປລາວ ໃຫ້ສາມາດຮັບປະກັນສະຖຽນລະພາບທາງດ້ານເງິນຕາ, ສະຖາບັນການເງິນມີຄວາມເຂັ້ມແຂງ, ລະບົບການຊຳລະມີຄວາມທັນສະໄໝ ແລະ ປອດໄພ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ; ມີກົງຈັກການຈັດຕັ້ງທີ່ເປັນລະບົບຄົບຊຸດ ແລະ ສົມຄູ່ກັບການຈັດຕັ້ງປະຕິບັດພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ; ຈັດຕັ້ງປະຕິບັດວຽກງານການເງິນແລະການບັນຊີຢ່າງເປັນລະບົບ ໃຫ້ສອດຄ່ອງກັບຈຸດພິເສດ, ຄຸນລັກສະນະ ແລະ ການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປລາວ ກໍຄືການເຄື່ອນໄຫວຂອງທະນາຄານກາງໃນພາກພື້ນ ແລະ ສາກົນ.

## ເຝິກອົບຮົມ...

(ຕໍ່ຈາກໜ້າ 1)

ອົບຮົມຄັ້ງນີ້ ເປັນການຈັດຕັ້ງປະຕິບັດແຜນການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງແລະພະນັກງານທີ່ເປັນເສນາທິການ ໄລຍະປີ2024-2025ໃຫ້ສຳເລັດ ແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນຖານະເປັນອົງການຕົວແທນໃຫ້ແກ່ສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ໃຫ້ນັບມື້ນັບດີຍິ່ງຂຶ້ນ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີ ແລະ ແລກປ່ຽນຄວາມເຫັນຕໍ່ການສ້າງຄວາມເຊື່ອໝັ້ນສຳຫຼັບວິທະຍາກອນ ແລະ ປາຖະກະຖາ, ບົດບາດການເປັນວິທະຍາກອນ,ແລະການສ້າງແຜນການສອນ-ການກະກຽມບົດນຳສະເໜີ; ບັນດາສຳມະນາກອນໄດ້ເອົາໃຈໃສ່ຕິດຕາມຮັບຟັງການສະເໜີ, ຄົ້ນຄວ້າ, ແລກປ່ຽນຄຳເຫັນຕໍ່ເນື້ອໃນຫົວຂໍ້ຕ່າງໆທີ່ວິທະຍາກອນນຳມາສະເໜີ ເພື່ອສາມາດເປັນວິທະຍາກອນທີ່ມີຄຸນນະພາບສູງຂຶ້ນແລະທົດລອງເປັນວິທະຍາກອນຕົວຈິງ.

ການເຝິກອົບຮົມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິເອເຊຍ (TAF) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

## ຜູ້ແທນ...

(ຕໍ່ຈາກໜ້າ 5)

ຕາມກວດກາ,ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ມີຄວາມເຂັ້ມແຂງ ເພື່ອຕອບສະໜອງບັນດາສິ່ງທ້າທາຍຕ່າງໆທີ່ອາດຈະເກີດຂຶ້ນ ເຊິ່ງອາຊຽນໄດ້ຮັບຮອງເອົາຂໍ້ສະເໜີແນະການລົງທຶນຢ່າງມີຄວາມຮັບຜິດຊອບ ໃນຂະແໜງການອາຫານ, ກະສິກຳ ແລະ ປ່າໄມ້ ASEAN RAI ໃນປີ 2018 ບັນດາຂໍ້ສະເໜີແນະດັ່ງກ່າວນີ້ແນໃສ່ການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບທີ່ມີຄວາມສອດຄ່ອງກັບຄຳໝັ້ນສັນຍາວ່າດ້ວຍການຄ້ຳປະກັນດ້ານສະບຽງອາຫານ, ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງແລະການຮັບມືກັບການປ່ຽນແປງດິນຟ້າອາກາດ.

ກອງປະຊຸມ AIPA-FAO ຄັ້ງທີ 3 ໄດ້ສະເໜີພາບລວມ ແລະ ແຜນງານໃນຕໍ່ໜ້າຂອງບັນດາຂໍ້ແນະນຳຂອງອາຊຽນວ່າດ້ວຍການລົງທຶນຢ່າງມີຄວາມຮັບຜິດຊອບ ໃນຂະແໜງອາຫານ, ກະສິກຳ ແລະ ປ່າໄມ້ ASEAN RAI 2024-2030; ທົບທວນຄືນແຜນງານຕົ້ນຕໍຂອງອາຊຽນ; ການສ້າງຄວາມເຂັ້ມແຂງພາຍນພາກພື້ນ ໃນການຈັດຕັ້ງປະຕິບັດການລົງທຶນຢ່າງມີຄວາມຮັບຜິດຊອບ ໃນຂະແໜງອາຫານ, ກະສິກຳແລະປ່າໄມ້. ນອກຈາກນັ້ນ, ຍັງໄດ້ພ້ອມກັນປຶກສາຫາລື, ແລກປ່ຽນຄຳຄິດເຫັນກ່ຽວກັບຂອດການສົ່ງເສີມການຈັດຕັ້ງປະຕິບັດບັນດາຂໍ້ສະເໜີແນະດັ່ງກ່າວ, ພ້ອມທັງວາງທິດທາງໃນຕໍ່ໜ້າ ເພື່ອໃຫ້ບັນດາສະມາຊິກລັດຖະສະພາອາຊຽນມີຄວາມເຂົ້າໃຈແຈ້ງ ແລະ ສາມາດນຳໃຊ້ບັນດາຂໍ້ແນະນຳເຫຼົ່ານີ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງໃນພາກພື້ນອາຊຽນ.

# ຄະນະຜູ້ແທນລາວ ເຂົ້າຮ່ວມກອງປະຊຸມສຳມະນາສະມາຊິກລັດຖະສະພາອາຊຽນ



(ສພຊ)-ວັນທີ20-29 ພະຈິກ 2024 ທ່ານ ຣສ. ປອ. ວຽງວິໄລ ທ່ຽງຈັນໄຊ ຮອງປະທານກຳມາທິການຍຸຕິທຳພ້ອມດ້ວຍຄະນະ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສຳມະນາສະມາຊິກລັດຖະສະພາບັນດາປະເທດອາຊຽນ ທີ່ນະຄອນຫຼວງປັກກິ່ງ, ແຂວງກວາງຊີ ແລະ ແຂວງກວາງຕຸ້ງ, ສປຈີນ ທີ່ຈັດໂດຍສະຖາບັນເຝິກອົບຮົມນັກທຸລະກິດສາກົນ ຫຼື ສູນເຝິກອົບຮົມກະຊວງການຄ້າ (Academy for International Business Officials (AIBO) or Training Center of the Ministry of Commerce) ເຊິ່ງມີຄະນະຜູ້ແທນລັດຖະສະພາຈາກ 7 ປະເທດສະມາຊິກອາຊຽນເຂົ້າຮ່ວມ.

ທ່ານ ຣສ. ປອ. ວຽງວິໄລ ທ່ຽງຈັນໄຊ ໄດ້ມີຄຳເຫັນຕໍ່ພິທີເປີດ ໂດຍຕີລາຄາສູງຕໍ່ກອງປະຊຸມຄັ້ງນີ້ ເປັນການຊຸກຍູ້ໃຫ້ບັນດາປະເທດອາຊຽນແລະສປຈີນ ສົ່ງເສີມການພົວພັນຮ່ວມມືແລະປະກອບສ່ວນອັນໃຫຍ່ຫຼວງເຂົ້າໃນການເພີ່ມທະວີການພົວພັນມິດຕະພາບທີ່ເປັນມູນເຊື້ອ ແລະ ການຮ່ວມມືອັນດີງາມລະຫວ່າງລັດຖະສະພາບັນດາປະເທດອາຊຽນ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດແຫ່ງສປຈີນ (National People's Congress-NPC), ເປັນການເສີມຂະຫຍາຍການພົວພັນມິດຕະພາບທີ່ເປັນມູນເຊື້ອລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ກໍຄືການແລກປ່ຽນ ແລະ ຖອດຖອນບົດຮຽນເຊິ່ງກັນແລະກັນໃນການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດຂອງປະເທດສະມາຊິກອາຊຽນ ກໍຄືບັນຫາອື່ນໆທີ່ສອງຝ່າຍມີຄວາມສົນໃຈ.

ກອງປະຊຸມໄດ້ຜ່ານການຄົ້ນຄວ້າ ແລະ ແລກປ່ຽນຄຳຄິດຄຳເຫັນຕໍ່ຫົວຂໍ້ທີ 1: “ສົ່ງເສີມການພັດທະນາຄຸນນະພາບສູງ ແລະບັນລຸຄວາມຈະເລີນຮຸ່ງເຮືອງທົ່ວປວງຊົນ”(ແນະນຳກ່ຽວກັບຄວາມໝາຍທາງວິທະຍາສາດຕາມເສັ້ນທາງຈີນ ໃນການຫັນເປັນທັນສະໄໝ ໂດຍອີງໃສ່ເງື່ອນໄຂແຫ່ງຊາດຂອງຈີນ, ການພັດທະນາກຳລັງການຜະລິດຄຸນນະພາບໃໝ່); ຫົວຂໍ້ທີ 2: “ການເພີ່ມທະວີການຮ່ວມມື ຈີນ-ອາຊຽນ ໃນຂົງເຂດຕ່າງໆພາຍໃຕ້ຂອບຂໍ້ລິເລີ່ມໜຶ່ງແລວໜຶ່ງເສັ້ນທາງ” (ການຮ່ວມມືໜຶ່ງແລວໜຶ່ງເສັ້ນທາງທີ່ມີຄຸນນະພາບສູງ, ສ້າງປະຊາຄົມຄູ່ຮ່ວມຊາຕາກຳຈີນ-ອາຊຽນທີ່ໃກ້ຊິດຫຼາຍຂຶ້ນ); ຫົວຂໍ້ທີ 3: “ຍຶດໝັ້ນແນວທາງຖືປະຊາຊົນເປັນໃຈກາງ ແລະ ຮັບປະກັນໃຫ້ປະຊາຊົນເປັນເຈົ້າຂອງປະເທດຊາດ” (ລະບົບສະພາປະຊາຊົນ ແລະ ປະຊາທິປະໄຕທົ່ວປວງຊົນ, ການຈັດຕັ້ງປະຕິບັດຂະບວນການປະຊາທິປະໄຕຂອງທົ່ວປວງຊົນໃນຂົງເຂດກົດໝາຍ ແລະ ວຽກງານຕິດຕາມກວດກາຂອງ NPC).

ຮອງປະທານກຳມາທິການຍຸຕິທຳ ພ້ອມດ້ວຍຄະນະ ໄດ້ພົບປະສະຫາຍ ນາງ ຢາງ ຈິງຮວາ (Yang Jinghua) ຮອງຫົວໜ້າກົມ, ຄະນະປະຈຳສະພາຜູ້ແທນປະຊາຊົນເຂດປົກຄອງຕົນເອງກວາງຊີຈ້ວງ, ສະຫາຍ ນາງ ຢາງ ຈິງຮວາ ໄດ້ສະແດງຄວາມຍິນດີຕ້ອນຮັບແລະຕີລາສູງຕໍ່ການມາຢ້ຽມຢາມເຂດປົກຄອງຕົນເອງກວາງຊີຈ້ວງ ແລະ ເຂົ້າຮ່ວມກອງປະຊຸມສຳມະນາສະມາຊິກລັດຖະສະພາບັນດາປະເທດອາຊຽນໃນຄັ້ງນີ້.

ທ່ານ ຣສ. ປອ. ວຽງວິໄລ ທ່ຽງຈັນໄຊ ໄດ້ມີໂອກາດໃຫ້ສຳພາດຕໍ່ສື່ມວນຊົນຂອງ NPC ກ່ຽວກັບ: 1) ຄວາມປະທັບໃຈໃນໄລຍະຢ້ຽມຢາມ ສປຈີນ; 2) ຄຳເຫັນຕໍ່ການຮ່ວມມື ແລະ ສ້າງປະຊາຄົມຮ່ວມຊາຕາກຳ ຈີນ-ອາຊຽນ; 3) ຄຳເຫັນຕໍ່ການໄປຢ້ຽມຢາມສຳນັກງານປະສານງານຝ່າຍນິຕິບັນຍັດຂັ້ນທ້ອງຖິ່ນແລະຂະບວນການສ້າງ, ປັບປຸງນິຕິກຳ ໂດຍການມີສ່ວນຮ່ວມຂອງປະຊາຊົນ ຕາມແນວທາງປະຊາທິປະໄຕຂອງຈີນ ແລະ 4) ຄຳເຫັນເນື່ອງໃນໂອກາດຄົບຮອບ 70ປີການສ້າງຕັ້ງສະພາຜູ້ແທນປະຊາຊົນທົ່ວປະເທດ ແຫ່ງ ສປຈີນ ເພື່ອເພີ່ມທະວີການພົວພັນຮ່ວມມື ລະຫວ່າງອົງການນິຕິບັນຍັດ ສປຈີນແລະ ສະພາແຫ່ງຊາດແຫ່ງ ສປປລາວ.

ນອກນັ້ນ, ຄະນະຜູ້ແທນລາວ ຍັງໄດ້ເຄື່ອນໄຫວຢ້ຽມຢາມ ແລະ ທັດສະນະສຶກສາສະຖານທີ່ສຳຄັນທາງດ້ານການເມືອງ, ພື້ນຖານໂຄງລ່າງທາງດ້ານເສດຖະກິດ, ສະຖານທີ່ທ່ອງທ່ຽວທາງດ້ານປະຫວັດສາດຈຳນວນໜຶ່ງ ຢູ່ນະຄອນຫຼວງປັກກິ່ງ, ແຂວງກວາງຊີ ແລະ ແຂວງກວາງຕຸ້ງ.

# ມອບ-ຮັບເຄື່ອງຊ່ວຍເຫຼືອ ແລະ ເຝິກອົບຮົມການນຳໃຊ້ລະບົບອິນເຕີເນັດວາຍຟາຍ ແລະ ເຄື່ອງອຸປະກອນໄອທີ



(ສພຊ)-ເພື່ອຕິດຕາມ, ກວດກາການນຳໃຊ້ລະບົບອິນເຕີເນັດວາຍຟາຍ ແລະ ເຄື່ອງມືໄອຊີທີ ພາຍຫຼັງຕິດຕັ້ງດ້ານເຕັກນິກສຳເລັດ ທັງເປັນການເກັບກຳຜົນຂອງການນຳໃຊ້ແລະບັນດາຂໍ້ສະເໜີ ເພື່ອລາຍງານຕໍ່ຜູ້ໃຫ້ທຶນຮັບຊາບເຖິງຜົນສຳເລັດເບື້ອງຕົ້ນແລະເປັນບ່ອນອີງໃນການຂຶ້ນແຜນວຽກການຊ່ວຍເຫຼືອ ແລະ ແຜນງົບປະມານຮັບໃຊ້ໃຫ້ແກ່ການຫັນເປັນທັນສະໄໝຢູ່ບັນດາສະພາປະຊາຊົນຂັ້ນແຂວງ (ສພຂ) ພ້ອມນັ້ນ, ຍັງເປັນການລະດົມຂົນຂວາຍການຊ່ວຍເຫຼືອເຂົ້າໃນວຽກງານດັ່ງກ່າວໃຫ້ຕໍ່ເນື່ອງ ແລະ ສອດຄ່ອງກັບບຸລິມະສິດຂອງ ສພຂ ແລະ ຕອບສະໜອງໄດ້ການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບຜົນງານການເຄື່ອນໄຫວຂອງຕົນໃຫ້ແກ່ປະຊາຊົນບັນດາເຜົ່າຊາບ.

ວັນທີ 25 ພະຈິກ-05 ທັນວານີ້, ຄະນະເລຂາທິການສະພາແຫ່ງຊາດ (ຄລສ) ພ້ອມດ້ວຍທີມງານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPS) ໄດ້ຈັດພິທີມອບ-ຮັບເຄື່ອງຊ່ວຍເຫຼືອລະຫວ່າງ ຄລສ ກັບ ສພຂ ແລະ ເຝິກອົບຮົມການນຳໃຊ້ລະບົບອິນເຕີເນັດວາຍຟາຍ ແລະ ເຄື່ອງອຸປະກອນໄອທີ ເຊິ່ງໄດ້ສຳເລັດວຽກດ້ານເຕັກນິກ, ການຕິດຕັ້ງລະບົບວາຍຟາຍ ແລະ ການຕິດຕັ້ງອຸປະກອນ ໃຫ້ແກ່ສະພາປະຊາຊົນຂັ້ນແຂວງທົ່ວປະເທດ ຢູ່ 3 ຈຸດຄື: ຈຸດທີ 1 ຢູ່ແຂວງອຸດົມໄຊ ໃນວັນທີ 25-26 ພະຈິກ ມີແຂວງຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ ແລະ ໄຊຍະບູລີ ໂດຍການກ່າວມອບ ແລະ ເປັນປະທານກອງປະຊຸມເຝິກອົບຮົມຂອງທ່ານ ປອ. ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ; ຈຸດທີ 2 ຢູ່ແຂວງສະຫວັນນະເຂດ ໃນວັນທີ 28-29 ພະຈິກ ມີນະຄອນຫຼວງວຽງຈັນ, ຫົວພັນ, ຊຽງຂວາງ, ວຽງຈັນ, ຈຳປາສັກແລະໄຊສົມບູນ ແລະ ຈຸດທີ3 ຢູ່ແຂວງຈຳປາສັກ ໃນວັນທີ4-5 ທັນວາ ມີແຂວງບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື ໂດຍການກ່າວມອບແລະເປັນປະທານກອງປະຊຸມເຝິກອົບຮົມຂອງທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດເຊິ່ງມີຕາງໜ້າຄະນະປະຈຳ ສພຂ ກ່າວຮັບ ແລະ ມີພະນັກງານຈາກ ຄລສ, ສພຂເຂົ້າຮ່ວມເປັນສັກຂີພະຍານ.

ໃນການເຝິກອົບຮົມ, ສຳມະນາກອນໄດ້ຮັບຟັງພາບລວມຂອງການນຳໃຊ້ໄອຊີທີໃນລັດຖະສະພາສາກົນ: ບົດຮຽນທີ່ດີ, ບາງຄຳແນະນຳ ແລະ ການນຳໃຊ້ໄອຊີທີຢ່າງມີປະສິດທິພາບ; ພາບລວມບັນດາບົດຮຽນຂອງຕ່າງປະເທດ ແລະ ທ່າອ່ຽງໃນປັດຈຸບັນ: ຜົນສຳເລັດທີ່ຜ່ານມາ (ບົດຮຽນຈາກລັດຖະສະພາແບບເອເລັກໂຕຣນິກ ແລະ ບົດລາຍງານລັດຖະສະພາໂລກ); ບົດລາຍງານຜົນສຳເລັດຂອງກອງປະຊຸມນະວັດຕະກຳ ຄັ້ງທີ 1 ທີ່ຈັດຂຶ້ນໃນເດືອນພຶດສະພາຜ່ານມາ; ການນຳໃຊ້ໄອຊີທີໃນການກະກຽມເນື້ອໃນສື່. ຈາກນັ້ນ, ໄດ້ມີການນຳສະເໜີພາກປະຕິບັດສຳລັບການຜະລິດ ແລະ ການເຜີຍແຜ່ເນື້ອຫາສື່ສັງຄົມດ້ວຍເຄື່ອງມືໄອຊີທີ; ພ້ອມທັງຈັດກິດຈະກຳເປັນກຸ່ມໃນການສ້າງເນື້ອໃນ (ຂ່າວວິດີໂອສັ້ນ) ເພື່ອເຜີຍແຜ່ຜ່ານສື່ສັງຄົມກ່ຽວກັບພາລະບົດບາດ, ສິດແລະໜ້າທີ່ຂອງສພຂ, ການພົບປະປະຊາຊົນຂອງສະມາຊິກສະພາປະຊາຊົນຂັ້ນແຂວງ.

**(ນາງ ອາລິນ ສຸພົມມະປະດິດ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຂອງທ່ານ ອານຸພາບ ຕຸນາລົມ ຄະນະເລຂາທິການສູນກາງພັກ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ; ເຂົ້າຮ່ວມມີທ່ານ ອາດສະພັງທອງ ສີພັນດອນ ເຈົ້າຄອງນະຄອນຫຼວງວຽງຈັນ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ການນຳພັກ-ລັດຂັ້ນສູງ ນວ, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ພ້ອມດ້ວຍແຂກຖືກເຊີນ.

ພາຍຫຼັງທ່ານ ອານຸພາບ ຕຸນາລົມ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ, ກອງປະຊຸມໄດ້ຮັບຟັງການລາຍງານຂອງອົງການປົກຄອງນະຄອນຫຼວງວຽງຈັນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ2025, ແຜນການລົງທຶນຂອງລັດປີ 2025, ແຜນການນຳໃຊ້ເງິນເກີນແຜນປີ 2024 ແລະ ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຢູ່ ນວ ຈາກທ່ານອາດສະພັງທອງສີພັນດອນ, ທ່ານ ນາງ ລຳພອຍ ສີອັກຄະຈັນ ຮອງປະທານ ສປນວ, ຕາງໜ້າຄະນະປະຈຳ ສປນວ ກໍໄດ້ປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ; ຈາກນັ້ນ, ປະທານກອງປະຊຸມ ມີຄຳເຫັນເຈາະຈີ້ມທັງໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນຕໍ່ບົດລາຍງານຂອງອົງການປົກຄອງນະຄອນຫຼວງວຽງຈັນ, ບັນດາທ່ານສສຊ ແລະ ສສນວ ກໍໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຕໍ່ບົດລາຍງານຢ່າງກົງໄປກົງ.

ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສປນວ ຊຸດທີ II ຈະດຳເນີນໄປຈົນເຖິງວັນທີ 24 ທັນວາ 2024 ເຊິ່ງຈະໄດ້ພິຈາລະນາແລະຮັບຮອງເອົາ: 1.ບົດລາຍງານຂອງອົງການປົກຄອງນະຄອນຫຼວງວຽງຈັນກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານປະຈຳປີ2024 ແລະ ທິດທາງແຜນການປະຈຳປີ 2025, ແຜນການລົງທຶນຂອງລັດປີ 2025, ແຜນການນຳໃຊ້ເງິນເກີນແຜນປີ 2024 ແລະ ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຢູ່ ນວ; 2. ບົດລາຍງານການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກໃນ ນວ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025; 3. ບົດລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025, ບົດລາຍງານຜົນຂອງການກວດສອບຄືນ ແລະ ການສະຫຼຸບງົບປະມານຂາດຕົວປະຈຳປີ2023ຂອງອົງການກວດສອບປະຈຳພາກກາງ 1; 4. ບົດລາຍງານການຈັດຕັ້ງປະຕິບັດວຽກງານກວດກາປະຈຳປີ 2024 ແລະ ທິດທາງແຜນການປີ2025ຂອງອົງການກວດກາລັດນວ;5.ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງອົງການໄອຍະການປະຊາຊົນພາກກາງ ແລະ ອົງການໄອຍະການປະຊາຊົນ ນວ, ບົດລາຍງານຂອງອົງການໄອຍະການປະຊາຊົນນວ ກ່ຽວກັບການຕິດຕາມກວດກາການດຳເນີນຄະດີຂອງອົງການສືບສວນ-ສອບສວນຂັ້ນສູນກາງ ໃນໄລຍະຜ່ານມາ; 6. ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງສານປະຊາຊົນພາກກາງ ແລະ ສານປະຊາຊົນນວ;ບົດລາຍງານຂອງສານປະຊາຊົນນວກ່ຽວກັບກົນໄກການປະສານງານລະຫວ່າງສານປະຊາຊົນກັບຄ້າຍຄຸມຂັງ-

ອ່ານຕໍ່ໜ້າ 9




# ໝ້ຽງເກີດຈາກເຫຼັກ

**# ດົ້ນກົບເມກ**

ຖ້າວ່າເຮົາປະປ່ອຍໃຫ້ໝ້ຽງກິນເຫຼັກດົນນານໄປ ເຫຼັກກໍຈະຜຸພັງຂາດມຸ່ນ ສູນສິ້ນໄປຕາມການເວລາ ໂລກນີ້ບໍ່ມີໃຜສາມາດປະຕິເສດໄດ້ວ່າໝ້ຽງຖ້າເກີດຈາກເຫຼັກມັນກໍຈະກັດກິນເຫຼັກຈົນຜຸພັງ ບາງຄົນຜູ້ເປັນເຈົ້າຂອງເຫຼັກທີ່ຢາກຮັກສາເຫຼັກໄວ້ໃຊ້ຍາວນານ ເຂົາກໍຈະຫາວິທີທຳລາຍໝ້ຽງ ແລະ ປ້ອງກັນບໍ່ໃຫ້ຂີ້ໝ້ຽງເກີດກິນເຫຼັກ, ບາງຄົນກໍເອົານ້ຳຢາ-ສານເຄມີມາທາໃສ່ ກັນບໍ່ໃຫ້ເຫຼັກເກີດຂີ້ໝ້ຽງສັງເກດໄດ້ວ່າຖ້າມັນເປັນຂີ້ໝ້ຽງກິນເຫຼັກກໍຈະບໍ່ມີປະໂຫຍດມີແຕ່ສ້າງຜົນເສຍຢ່າງດຽວ.

ຜູ້ຂຽນເຄີຍໄດ້ຟັງໄດ້ເຫັນຄົນເຖົ້າອະທິບາຍວ່າ: ການຮັກສາເຫຼັກໄວ້ໃຊ້ປະໂຫຍດຍາວນານ ເຈົ້າຂອງເຫຼັກຕ້ອງຊອກວິທີ ເອົາເຄື່ອງວັດຖຸມາຂັດຖູເອົາໝ້ຽງອອກຈາກເຫຼັກ ໃຊ້ເວລາຂັດຖູດົນນານສົມຄວນ ເຖິງວ່າເຫຼືອເນື້ອເຫຼັກໜ້ອຍລົງ ຖ້າຢາກຮັກສາເຫຼັກໃຊ້ປະໂຫຍດກໍຕ້ອງໄດ້ຂັດຖູເອົາໝ້ຽງອອກໃຫ້ໝົດເພາະມັນເປັນຂີ້ໝ້ຽງປຽບຄືເຊື້ອພະຍາດອັນໜຶ່ງ ອັນຕະລາຍ ຖ້າປ່ອຍປະໄວ້ຍາວນານ ຂີ້ໝ້ຽງມັນກໍກັດກິນເຫຼັກຈົນໝົດ, ເວລາຂັດຖູຂີ້ໝ້ຽງໃນໂຕເຫຼັກ ຜູ້ເຮັດກໍຕ້ອງໄດ້ລະວັງມີສະຕິຖູ ບໍ່ໃຫ້ເສດຂີ້ໝ້ຽງຟົ້ງເຂົ້າຕາ ຫຼື ຟົ້ງໃສ່ບາດແຜຕ່າງໆ ເພາະມັນອັນຕະລາຍສູງ, ການຮຸກຖູຂີ້ໝ້ຽງອອກຈາກເຫຼັກກໍໃຊ້ເວລາພໍສົມຄວນ ບໍ່ແມ່ນຖູຕາມໃຈ ເພາະລະວັງເວລາເສດເຫຼັກທີ່ມີຂີ້ໝ້ຽງເກາະກິນເລິກ ອາດກໍ່ໃຫ້ບາດມືເຈັບໄດ້ ໝ້ຽງເກີດຈາກເຫຼັກສັນໃດ ຄວາມໂລບຢາກໄດ້ກໍເກີດຈາກໃນໃຈຂອງມະນຸດສັນນັ້ນ ຖ້າວ່າໃນໜ່ວຍງານໃດ, ກົມໄກວຽກບ່ອນໃດ ຫາກເກີດພະຍາດລັກສະນະໝ້ຽງກິນເຫຼັກ ກໍຕ້ອງໄດ້ສະດຸ້ງໄວ ຕໍ່ການແກ້ໄຂບັນຫາ ຖ້າປະປ່ອຍໄວ້ຍາວນານ ໝ້ຽງກໍຈະກັດກິນກິນເນື້ອເຫຼັກເຂົ້າໄປເລິກ ເຊັ່ນດຽວກັບພະຍາດອາດຍາສິດ-ພະຍາດເປັນແຕ່ເວົ້າ, ພະຍາດຄິດຫາແຕ່ປະໂຫຍດໃຊ້ໜ້າທີ່ບາລະມີບັງໜ້າ, ກໍຈະສ້າງຄວາມເສຍຫາຍແກ່ສ່ວນລວມໄດ້ຫຼວງຫຼາຍ ແລະ ຍາວນານ. ສັງລວມໄດ້ວ່າ: ແກ້ໄຂຂີ້ໝ້ຽງກິນເຫຼັກ ຕ້ອງໃຊ້ເຄື່ອງມືຮຸກຖູອອກ ຫຼື ໃຊ້ເຄື່ອງມືເຈຍ ຂີ້ໝ້ຽງອອກໃຫ້ແຈ້ງໃສເຫັນຜິວເຫຼັກ, ຂີ້ໝ້ຽງເກີດຈາກເຫຼັກ ຄວາມໂລບກໍເກີດໃນໃຈຄົນເຊັ່ນດຽວກັນ!

ສະເໜີແລກປ່ຽນ.






## ວິທີເຮັດວຽກ

**ພາກທີ 7**
**ບັນຫາພະນັກງານ**

**5. ວິທະຍາສາດ:** ຍົກຕົວຢ່າງ ພະນັກງານທະຫານກໍຕ້ອງຄົ້ນຄວ້າຮ່ຳຮຽນວິທະຍາສາດທະຫານພະນັກງານ. ພະນັກງານພະແນກສາທາລະນະສຸກ ກໍຄົ້ນຄວ້າຮ່ຳຮຽນວິທະຍາສາດການແພດ. ພະນັກງານງານພະແນກໃດໃຫ້ຄົ້ນຄວ້າຮ່ຳຮຽນທິດສະດີພະແນກນັ້ນ. ບັນດາອົງການນຳຂອງແຕ່ລະພະແນກຕ້ອງລວບລວມເອກະສານ, ກະວາງວິທີສອນ ແລະ ວິທີຮຽນ, ກວດກາເບິ່ງຜົນທີ່ໄດ້ຮັບເຮັດແນວໃດໃຫ້ພະນັກງານພະແນກຂອງຕົນຄ່ອຍໆເຄີຍເຮັດວຽກການເອງໄດ້.

**ຂ. ການອົບຮົມການເມືອງ:** ການເມືອງມີສອງຊະນິດຄື: ສະພາບການປັດຈຸບັນ ແລະ ນະໂຍບາຍ, ວິທີອົບຮົມສະພາບການປັດຈຸບັນແມ່ນແນະນຳ ແລະ ຊຸກຍູ້ໃຫ້ພະນັກງານອ່ານໜັງສືພິມ, ຖົກຖຽງ, ຊີ້ແຈງບັນດາບັນຫາສຳຄັນ ແລະ ກະວາງເວລາເປີດກອງປະຊຸມພະນັກງານ ແລະ ລາຍງານສະພາບການປັດຈຸບັນ.

ອົບຮົບນະໂຍບາຍ, ແມ່ນຊຸກຍູ້ພະນັກງານໃຫ້ຄົ້ນຄວ້າຖົກຖຽງກັນໃນເລື່ອງມະຕິຕົກລົງ, ໂຄງການ ແລະ ຖະແຫຼງການຂອງພັກ, ລັດຖະບານ ການອົບຮົມການເມືອງນັ້ນພະແນກໃດກໍຕ້ອງມີ. ແຕ່ຕ້ອງເບິ່ງຕາມຄວາມຕ້ອງການຂອງແຕ່ລະພະແນກເພື່ອກະວາງວ່າຈະໃຫ້ຮຽນຫຼາຍ ຫຼື ໜ້ອຍເທົ່າໃດ, ຍົກຕົວຢ່າງ ພະນັກງານວິຊາສະເພາະພະແນກການແພດ ແລະ ວັດທະນະທຳກໍຮຽນໜ້ອຍກວ່າ, ພະນັກງານພະແນກໂຄສະນາ, ຈັດຕັ້ງເຫຼົ່ານັ້ນຕ້ອງຄົ້ນຄວ້າຮ່ຳຮຽນການເມືອງຫຼາຍກວ່າ.

ອ່ານຕໍ່ສະບັບໜ້າ...

## ປະທານ...

(ຕໍ່ຈາກໜ້າ 1)

ພາກພື້ນອາຊີຕາເວັນອອກສຽງໃຕ້ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມແລະເຮັດວຽກ ຢູ່ ສປປລາວ ເພື່ອເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ອັນເປັນມູນ ເຊື້ອທີ່ດີງາມລະຫວ່າງສອງປະເທດ ເວົ້າລວມ, ເວົ້າສະເພາະແມ່ນການແລກປ່ຽນຂໍ້ມູນກ່ຽວກັບວຽກງານສາສະໜາເຢຊູ ນິກາຍໂອໂຕດົກ ລັດເຊຍ.

ໃນການພົບປະ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມໃນການການເປັນຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ ລາວ-ລັດເຊຍທີ່ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ທັງລາຍງານສະພາບການທີ່ພົ້ນເດັ່ນຂອງ ສປປລາວແລະສະພາແຫ່ງຊາດ; ພ້ອມນັ້ນ, ຍັງແຈ້ງໃຫ້ຊາບກ່ຽວກັບສະພາບການເຊື່ອຖືສາສະໜາ ຢູ່ ສປປລາວ ຕົ້ນຕໍແມ່ນສາສະໜາພຸດກວມເອົາ60ກວ່າສ່ວນຮ້ອຍ ເຊິ່ງລັດຖະທຳມະນູນ ແຫ່ງ ສປປລາວ ມາດຕາ 43 ໄດ້ກຳນົດສິດໃນການເຊື່ອຖືຫຼືບໍ່ເຊື່ອຖືຂອງພົນລະເມືອງທີ່ບໍ່ຂັດກັບກົດໝາຍ ແລະ ບໍ່ກໍ່ໃຫ້ເກີດການແບ່ງແຍກໃນສັງຄົມ.

ພະສັງຄະລາດ ເຊຣ໌ເກ ໄດ້ລາຍງານສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມລະຫວ່າງສອງປະເທດ, ທັງໄດ້ແຈ້ງການເຄື່ອນໄຫວຢ້ຽມຢາມ ຢູ່ ສປປລາວ ໃຫ້ທ່ານປະທານສະພາແຫ່ງຊາດ ແລະ ຄະນະຕ້ອນຮັບ ໄດ້ຮັບຊາບ.

## ປາຖະກະຖາ...

(ຕໍ່ຈາກໜ້າ 1)

ຊາດ ພາຍໃຕ້ການຊີ້ນຳ-ນຳພາຂອງພັກ, ຖືເອົາການສະເຫຼີມສະຫຼອງວັນຊາດທີ 2 ທັນວາ ເປັນການໂຄສະນາປຸກລະດົມນ້ຳໃຈຮັກຊາດ, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເສີມຂະຫຍາຍຄວາມສາມັກຄີ ແລະ ຍູ້ແຮງບົດບາດການນຳພາຂອງພັກ; ເພື່ອລະນຶກເຖິງຄຸນງາມຄວາມດີ, ຜົນງານອັນຍິ່ງໃຫຍ່ຂອງປະທານ ໄກສອນພົມວິຫານ ຜູ້ນຳທີ່ເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າທີ່ມີຕໍ່ປະເທດຊາດ ແລະ ຮ່ຳຮຽນເອົາແບບຢ່າງອັນດີງາມ ເພື່ອເຝິກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນສະມາຊິກພັກທີ່ດີ ເພື່ອສືບທອດພາລະກິດຂອງພັກ.

ໃນພິທີ, ສະຫາຍ ຄຳໃບ ດຳລັດ ກຳມະການສູນກາງພັກ, ປະທານຄະນະກວດກາພັກສະພາແຫ່ງຊາດ ໄດ້ທວນຄືນມູນເຊື້ອຂະບວນປະຕິວັດ ແລະ ຄວາມໝາຍສຳຄັນຂອງວັນຊາດທີ 2 ທັນວາ ອັນເປັນມູນເຊື້ອ ແລະ ໄຊຊະນະອັນຍິ່ງໃຫຍ່ໃນປະຫວັດສາດແຫ່ງການຕໍ່ສູ້ຂອງຊາດ ແມ່ນວັນທີ່ປະຊາຊົນລາວບັນດາເຜົ່າໄດ້ມີອິດສະລະພາບ ແລະ ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ ທັງເປັນວັນແຫ່ງການກ້າວສູ່ຍຸກສະໄໝໃໝ່ແຫ່ງການສ້າງປະເທດລາວ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ; ພ້ອມນັ້ນ, ຍັງຍົກໃຫ້ເຫັນເຖິງບັນດາເຫດການ ແລະ ໄຊຊະນະອັນຍິ່ງໃຫຍ່ຂອງກອງທັບ ແລະ ປະຊາຊົນລາວ ໃນຂະບວນການຕໍ່ສູ້ກູ້ຊາດ, ຜົນສຳເລັດຂອງການປະຕິບັດ 2 ໜ້າທີ່ຍຸດທະສາດ ແຕ່ອະດີດຈົນເຖິງປັດຈຸບັນ ທັງເນັ້ນໜັກໃຫ້ສືບຕໍ່ເສີມຂະຫຍາຍມູນເຊື້ອວັນຊາດທີ 2 ທັນວາ ເຂົ້າໃນການພັດທະນາປະເທດຊາດ. ຈາກນັ້ນ, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ເຜີຍແຜ່ຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງປະທານ ໄກສອນ ພົມວິຫານ ໂດຍຍົກໃຫ້ເຫັນເຖິງຜົນງານອັນໃຫຍ່ຫຼວງ ແລະ ແບບຢ່າງອັນດີເລີດຂອງປະທານ ໄກສອນ ພົມວິຫານ; ພ້ອມນັ້ນ, ຍັງເນັ້ນໜັກໃຫ້ຕັ້ງໜ້າຮ່ຳຮຽນເອົາແບບຢ່າງອັນດີເລີດຂອງປະທານ ໄກສອນ ພົມວິຫານ ເພື່ອສືບທອດພາລະກິດຂອງພັກໃນໄລຍະໃໝ່ໃຫ້ໄປເຖິງຈຸດໝາຍປາຍທາງໃນເງື່ອນໄຂທີ່ສະພາບສາກົນທີ່ມີທັງກາລະໂອກາດ ແລະ ສິ່ງທ້າທາຍທົດສອບ, ສົມທົບກັບສະພາບພາຍໃນກໍມີຄວາມຫຍຸ້ງຍາກບໍ່ໜ້ອຍ ແລະ ເພື່ອເຮັດຫຼ້ອນພາລະກຳປະຫວັດສາດທີ່ມອບໝາຍໃຫ້ນັ້ນ, ສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າທົ່ວປະເທດ ຕ້ອງໄດ້ເພີ່ມທະວີຄວາມສາມັກຄີເປັນຈິດໜຶ່ງໃຈດຽວພ້ອມກັນບຸກບືນສູ້ຊົນເຮັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍໃຫ້ສຳເລັດ, ໂດຍສະເພາະແມ່ນການຈັດຕັ້ງປະຕິບັດຄາດໝາຍສູ້ຊົນທີ່ກອງປະຊຸມໃຫຍ່ຂອງພັກກາງສະໄໝທີ XI ຂອງແຕ່ລະຂັ້ນວາງອອກ ໃນໄລຍະທ້າຍສະໄໝໃຫ້ສຳເລັດ, ສຸມໃສ່ປະຕິບັດ 2 ວາລະແຫ່ງຊາດແລະພ້ອມກັນເປັນເຈົ້າການແກ້ໄຂວິກິດການເສດຖະກິດທີ່ປະເທດເຮົາພວມປະເຊີນຢູ່ ໃຫ້ເຂົ້າສູ່ສະພາບປົກກະຕິໂດຍໄວ ແລະ ເອົາໃຈໃສ່ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ນັບມື້ນັບມີຊີວິດການເປັນຢູ່ດີຂຶ້ນ.

ຫຼັງຈາກນັ້ນ, ໄດ້ມີການສະຫຼຸບຖອດຖອນບົດຮຽນການຮັບໃຊ້ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເຊິ່ງທ່ານ ນາງ ອຳໄພ ວອນລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ໄດ້ຜ່ານຮ່າງບົດສະຫຼຸບຕີລາຄາຜົນສຳເລັດການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ໂດຍຍົກໃຫ້ເຫັນດ້ານດີ, ຂໍ້ຄົງຄ້າງ, ສາເຫດທີ່ພາໃຫ້ມີດ້ານດີ ແລະ ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້, ແຜນວຽກຈຸດສຸມພາຍຫຼັງສຳເລັດກອງປະຊຸມ, ແລະ ຄາດຄະເນແຜນການກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX; ຈາກນັ້ນ, ບັນດາທ່ານໃນກອງເລຂານຸການກອງປະຊຸມສະໄໝສາມັນເທື່ອທີ 8 ກໍໄດ້ປະກອບຄຳຄິດຄຳເຫັນຕໍ່ບົດສະຫຼຸບດັ່ງກ່າວ ແລະ ລາຍງານໂດຍຫຍໍ້ຂອບເຂດວຽກງານຂອງຕົນ.

ຕອນບ່າຍຂອງວັນດຽວກັນ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຍັງໄດ້ເປັນປະທານກອງປະຊຸມກະກຽມການດຳເນີນຊຳລະສະສາງລົດຂອງລັດຂອງສະພາແຫ່ງຊາດເຊິ່ງທ່ານໄດ້ເຜີຍແຜ່ດຳລັດວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ, ລົງວັນທີ 29 ກັນຍາ 2021; ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ເຜີຍແຜ່ແຈ້ງການຂອງກະຊວງການເງິນ ສະບັບເລກທີ 0589/ກງ, ລົງວັນທີ 15 ກຸມພາ 2024 ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການສະສາງລົດຂອງລັດ, ຄຳແນະນຳກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ລົດບໍລິຫານຂອງລັດ ສະບັບເລກທີ 0393/ກງ ແລະ ຂໍ້ຕົກລົງຂອງນາຍົກລັດຖະມົນຕີວ່າດ້ວຍການສະສາງລົດຂອງລັດ ສະບັບເລກທີ 169/ນຍ, ລົງວັນທີ 28 ທັນວາ 2023. ການເຜີຍແຜ່ເອກະສານວ່າດ້ວຍການຄຸ້ມຄອງ, ນຳໃຊ້ ແລະ ສະສາງລົດຂອງລັດຄັ້ງນີ້ ມີພະນັກງານບຳນານຂອງ ສພຊ ເຂົ້າຮ່ວມນຳ.

**(ນາງ ອາລິນ ສຸພົມມະປະດິດ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 7)

ດັດສ້າງ ກ່ຽວກັບການຈັດຕັ້ງສານເຄື່ອນທີ່, ການເອົາຜູ້ຖືກຫາມາຕັດສິນຢູ່ສານ ແລະ ການສົ່ງປະເດັນ ຫຼື ຄຳຕັດສິນໃຫ້ຄ້າຍຄຸມຂັງ-ດັດສ້າງເພື່ອຮັບປະກັນໃຫ້ມີຄວາມກົມກຽວຕາມຂັ້ນຕອນຂອງກົດໝາຍ;7.ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ແລະ ແຜນການເຄື່ອນໄຫວພົບປະປະຊາຊົນແລະເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ແລະ ສປນວ ຊຸດທີ II; 8. ຮ່າງມະຕິຂອງກອງປະຊຸມສະພາປະຊາຊົນ ວ່າດ້ວຍການດຳເນີນກອງປະຊຸມສະພາປະຊາຊົນ ແລະ ການລົງພົບປະຜູ້ມີສິດເລືອກຕັ້ງ; 9. ຮ່າງຂໍ້ ຕົກລົງວ່າດ້ວຍກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ.

ກອງປະຊຸມຍັງຈະໄດ້ຮັບຟັງ: 1. ບົດລາຍງານກ່ຽວ ກັບວິທີການຫຼື ມາດຕະການແກ້ໄຂໃຫ້ຖືກ ຕ້ອງຕາມກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ໂດຍສະເພາະແມ່ນຄຳຕັດສິນຂອງສານທີ່ຄ້າງປະຕິບັດຫຼາຍປີ; ບົດລາຍງານກ່ຽວກັບວິທີການແກ້ໄຂກໍລະນີຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເອົາຕົວຫຼົບຫຼີກ ຫຼື ຫຼົບໜີ ເພື່ອໃຫ້ຄຳຕັດສິນຂອງສານໄດ້ຮັບການປະຕິບັດຖືກຕ້ອງ, ຄົບຖ້ວນ, ທົ່ວເຖິງ ແລະ ທັນເວລາ; 2. ການປະກອບຄຳເຫັນຂອງອົງການແນວລາວສ້າງຊາດ ນວ ກ່ຽວກັບການເຄື່ອນໄຫວວຽກງານຂອງສະພາປະຊາຊົນນະຄອນຫຼວງ; 3. ບົດລາຍ ງານການປະເມີນຜົນການຈັດຕັ້ງປະຕິບັດບັນດານິຕິກຳໃຕ້ກົດໝາຍທີ່ສປນວ ໄດ້ຮັບຮອງ ຈຳນວນ 2 ສະບັບ ຄື: ຂໍ້ ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການປະເມີນລາຄາທີ່ດິນທົ່ວນະຄອນຫຼວງວຽງຈັນ ສະບັບເລກທີ 142/ຈນວ, ລົງວັນທີ 26 ກຸມພາ 2021 ແລະ ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການພັດທະນາ ແລະ ຄຸ້ມຄອງເຂດສະຫງວນຄອງນ້ຳວຽງ ຈັນ, ສະບັບເລກທີ 0966/ຈນວ, ລົງວັນທີ 11 ພະຈິກ 2019; 4. ການລາຍງານ, ຊີ້ແຈງບັນຫາສຳຄັນຕ່າງໆຂອງນະຄອນຫຼວງເປັນຕົ້ນ: 1) ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ຕິດພັນກັບການກຳນົດແຜນວຽກຈຸດສຸມ, ບຸລິມະສິດ ເພື່ອຈັດຕັ້ງວາ ລະແຫ່ງຊາດດັ່ງກ່າວ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ຂອງທ້າຍສະໄໝຮອດປີ 2025; 2) ມາດຕະການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດແລະແຜນການຈັດສັນເງິນເກີນແຜນປີ2024; 3) ການປະຕິບັດມາດຕະການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ໃຫ້ແກ່ພະນັກງານລັດ, ທະຫານ, ຕຳຫຼວດ; 4) ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ກ່ຽວກັບການສົ່ງເສີມການຜະລິດສິນຄ້າພາຍໃນ, ການກຳນົດໂຄງປະກອບລາຄາສິນຄ້າ ແລະ ການເຂົ້າຫາແຫຼ່ງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ-ຂະໜາດກາງ; 5) ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຢູ່ ນວ; 6) ການຄຸ້ມ ຄອງການນຳເຂົ້າສິນຄ້າທີ່ມີສານຕັ້ງຕົ້ນປະເພດຢາເສບຕິດ ເປັນຕົ້ນ: ຢາສູບໄຟຟ້າ, ກາເຟປາຕີ້ຄໍລາເຈນ, ປຸມເປົ້າ ແລະ ອື່ນໆ; 7) ການຈັດຕັ້ງປະຕິບັດໂຄງການຂົນສົ່ງແບບຍືນຍົງໃນຕົວເມືອງ ນວ (ລົດເມດ່ວນ BRT); ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຜັງເມືອງ ແລະ ແຜນຜັງເມືອງສະບັບທີIII ຂອງ ນວ ໄປຄຽງຄູ່ກັບການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ; 9) ການຈັດຕັ້ງປະຕິບັດໂຄງການກໍ່ສ້າງຂະຫຍາຍນ້ຳປະປາຈີນາຍໂມ້ ແລະ ທົ່ງສົ່ງນະຄອນຫຼວງວຽງຈັນ ທີ່ນຳໃຊ້ເງິນກູ້ຢືມຈາກລັດຖະບານຍີ່ປຸ່ນ; 10) ມາດຕະການໃນການຄຸ້ມຄອງການຂຸດຄົ້ນແຮ່ທາດຢູ່ນວ ຕິດພັນກັບການນຳໃຊ້ງົບປະມານພັດທະນາທ້ອງຖິ່ນແລະພັດທະນາຊຸມຊົນ; 11) ສະພາບການສຶກ ສາໃນ ນວ ທີ່ຕິດພັນກັບການປະລະການຮຽນຂອງນັກຮຽນໃນຊັ້ນມໍຕົ້ນ ແລະ ມໍປາຍປະຈຳສົກປີ2023-2024ແລະທິດທາງແຜນການປະຈຳສົກປີ 2024-2025.

ນອກຈາກນັ້ນ, ຍັງຈະໄດ້ຮັບຟັງການຊີ້ແຈງບາງບັນຫາພົ້ນເດັ່ນທີ່ ສສຊ ແລະ ສສນວ ຍົກຂຶ້ນ ຫຼື ຊັກຖາມໃນກອງປະຊຸມຈາກອົງການປົກຄອງ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ພາກສ່ວນກ່ຽວຂ້ອງຕື່ມອີກ.

ຄະນະເລຂາທິການ ສປນວ ໄດ້ຈັດຕັ້ງໜ່ວຍຮັບຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຂອງປະຊາຊົນຊາວນະຄອນຫຼວງວຽງຈັນຜ່ານໂທລະສັບສາຍດ່ວນໝາຍເລກ: 1156 ຫຼືໝາຍເລກໂທລະສັບ 021 260251 260242 (ໃນໂມງລັດຖະການ) ເຊິ່ງເລີ່ມເປີດຮັບນັບແຕ່ມື້ນີ້ເປັນຕົ້ນໄປ.

**(ນາງ ອາລິນ ສຸພົມມະປະດິດ)**

## ອາດ ກະວີລາວ

# ປີໃໝ່ເຕືອນສະຕິ

**# ອຳມະຕິ ທິດສະຣາຊ**

❊ ເຂັມໂມງເລີຍລ່ວງຍ້າຍ
ໝູນໄປຕາມເວລາ
ຈາກວັນເປັນຫລາຍມື້
ຄວາມຕາຍຫຍັບມໍໃກ້

ມິເຄີຍນັ່ງລໍໃຜ
ກົດເກນການຕັ້ງ
ເດືອນ-ປີ-ສະຕະວັດ
ດຶງຈ້ອງຈ່ອງເຮົາ ແທ້ໄດ!

❊ ບາງຄົນຈາຈົ່ມເວົ້າ
ສັງວ່າໄວວາໝູນ
ຍັງບໍ່ທັນກະທຳສ້າງ
ອີກດຽວພຽງຮັບຮູ້

ວັນແຫ່ງເວລາ
ຜ່ານໄປປານນ້ຳ
ຜົນງານດີເດັ່ນ
ເວລາລ້ຳລ່ວງໄປ

❊ ປີເກົ່າກາຍຜ່ານພົ້ນ
ໝູນວຽນວົນໄປມາ
ບອກເຮົາມີສະຕິຮູ້
ຢ່າພຽງປະປ່ອຍລ້າ

ປີໃໝ່ມາແທນ
ປ່ຽນແປງເລີງເລື້ອຍ
ວັນຄືນເດີນຜ່ານ
ເມົາຫລົ້ນຢ່າງດຽວ

❊ ອັນໜຶ່ງປີໃໝ່ນີ້
ໜຶ່ງປີເລີຍກາຍເຮົາ
ອັນໃດຍັງຄົງຄ້າງ
ຂໍ້ດີເຕີມແຕ່ງສ້າງ

ເຕືອນບອກຜົນງານ
ເຮັດຫຍັງມາໄດ້
ແຜນການຕັ້ງຕໍ່
ອັບປີນັ້ນຫຼືກາໄກ

❊ 2025 ແປປ່ຽນໃຫ້
ຢ່າມົວເມົາສະຫຼອງ
ຂໍຈົ່ງເອົາຕົວຕັ້ງ
ມີສະຕິປີໃໝ່ນີ້

ເຍືອງແວ່ນດຕົວເອງເດີ
ເຮີ່ນຳເບຍເຫຼົ້າ
ການງານທຸ່ນທ່ຽງ
ຕົວເຈົ້າຊິປອດໄພ

❊ ປີໃໝ່ໃຫ້ສະຕິຕໍ່ຕັ້ງ
ໄຟ່ດຳເນີນກຸສົນດີ
ເດີນຕາມທາງຖືກຕ້ອງ
ເປັນກຳລັງສືບສ້າງ

ເຍືອງຮຸ່ງດູຕົນ
ໃສ່ໃຈກະທຳສ້າງ
ນຳຊີວິດີເດັ່ນ
ເມືອງບ້ານຈຶ່ງຮຸ່ງເຮືອງ ຊອບແລ້ວ!



## ທັກທາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ **ອັນ**ເວລາປ່ຽນແປງ ລະດູການປ່ຽນໄປເປັນລະດູໜາວ ເຫັນຂ່າວແຈ້ງເຕືອນວ່າອາກາດຈະເຢັນລົງໃນຂອບເຂດທົ່ວປະເທດ ສາເຫດມາຈາກຄວາມກົດດັນອາກາດເຢັນຈາກປະເທດຈີນແຜ່ມາປົກຫຸ້ມ ກຽມແຜ່ນແພຜ້າຕຸ້ມ ອົບອຸ່ນກາຍາ ທ່ານເອີຍ! ສຸຂະພາບບໍ່ມີຂາຍ ທົ່ວໄປຕາມຫ້າງ ຈົ່ງພາກັນຮັກສາໄວ້ ກາຍໃຈໃຫ້ອົບອຸ່ນ ອັນໄຮຄາພະຍາດຮ້າຍ ຈຶ່ງໄກເວັ້ນຫ່າງໜີ **ນັ້ນແລ້ວ!**

❊ **ໜັງ**ສືພິມ **'ຜູ້ແທນປະຊາຊົນ'** ໄດ້ເດີນທາງມາສູ່ສະບັບທີ **999** ເຊິ່ງເລີ່ມຕົ້ນຈັດພິມມາແຕ່ **18 ມັງກອນ 2012** ເຖິງປັດຈຸບັນ ສູ່ສາຍຫູສາຍຕາຊາວປະຊາ ສັງຄົມ ໄດ້ຮັບຊົມມາຫຼາຍສະບັບ ມີເນື້ອຫາສາລະ ແລະ ຫຼາກຫຼາຍຄໍລຳ ທີ່ນຳສະເໜີການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ສະພາປະຊາຊົນຂັ້ນແຂວງ ກໍຄື ສສຊ ແລະ ສສຂ ໃນທົ່ວປະເທດ ເຮັດໃຫ້ພົງພີ່ນ້ອງ ນັກອ່ານທັງຫຼາຍ ໃນອົງການສື່ມວນຊົນ ກ່າວຊົມເຍີຍຍ້ອງ ຂໍສະຫຼອງໜຶ່ງພັນກຽມໄດ້ ແລະ ຝາກຂ່າວ ຂໍໃຫ້ຊາວປະຊາຊິດໃກ້ ຕິດຕາມຄົ້ນອ່ານຕໍ່ໄປ **ທ່ານເອີຍ!**

## ຊອບຍິ້ມ

*# ແອ່ນຕຸ້ງ*

### ເລື່ອງ: ໄດ້ພົບອີຫຼີ

ຜົວເມຍຄູ່ໜຶ່ງ ເດີນທາງໄປບ້າອອກບໍ່ສັກສິດແຫ່ງໜຶ່ງທີ່ມີຄົນມາຂໍພອນຫຼາຍ, ຝ່າຍຊາຍເລີ່ມກົ້ມໂຕລົງໄປທາງໜ້າ ແລ້ວເລີ່ມຕັ້ງຈິດອະທິຖານ ແລ້ວໂຍນເງິນທີ່ເປັນຫຼຽນລົງໄປ, ຝ່າຍຍິງກໍຢາກຂໍພອນຄືກັນ ຈຶ່ງກົ້ມໂຕໄປຄືກັບຝ່າຍຊາຍ ແຕ່ລາວກົ້ມລົງໄປຫຼາຍໂພດ ຈົນເຮັດໃຫ້ເສຍສູນ ແລ້ວຕົກລົງໄປໃນໜອງນ້ຳແລ້ວຈົມນ້ຳຕາຍ.

ຜູ້ເປັນຜົວຍິ້ມ ແລະ ເວົ້າຂຶ້ນຄ່ອຍໆວ່າ: ໂອ້ສັກສິດອີຫຼີ ຂໍຫຍັງກະໄດ້ຕາມນັ້ນ



## ຄະຕິເຕືອນໃຈ

*#ດອກຫຍ້າ*

ກິນແກງໃຫ້ຊອມດູກ້າງ
ດູກມັນຊິຢູ່ຄາງ

ຄາຄໍມັນຊິຍາກ
ກືນບ້າຊິບໍ່ລົງ

ລັດຖະສະພາຕ່າງປະເທດ

# ສີລັງກາ ກຽມສະເໜີຮ່າງກົດໝາຍ ປ້ອງກັນອາຊະຍະກຳທາງການເງິນ



(Xinhua) - ທ່ານ ຮາຣ໌ຊານາ ນານາຢັກກາຣາ (Harshana Nanayakkara) ລັດຖະມົນຕີກະຊວງຍຸຕິທຳສີລັງກາ ກ່າວຕໍ່ລັດຖະສະພາ ເມື່ອວັນພຸດ ທີ 04 ທັນວາຜ່ານມາວ່າ ຮ່າງກົດໝາຍສຳຄັນ 3 ສະບັບ ທີ່ມີຈຸດປະສົງເພື່ອກູ້ຄືນຊັບສິນທີ່ຖືກລັກ, ສະກັດກັ້ນອາຊະຍາກຳທາງການເງິນ, ແລະປົກປ້ອງສິດຂອງເຈົ້າໜີ້ ແລະ ລູກໜີ້ ຈະຖືກສະເໜີຕໍ່ລັດຖະສະພາໃນຕົ້ນໄຕມາດທຳອິດຂອງປີໜ້າ ເຊິ່ງລວມມີຮ່າງກົດໝາຍວ່າດ້ວຍລາຍໄດ້ຈາກການກໍ່ອາຊະຍາກຳ, ຮ່າງກົດໝາຍວ່າດ້ວຍການຊ່ວຍເຫຼືອ, ການຟື້ນຟູແລະການລົ້ມລະລາຍ, ແລະ ການປັບປຸງກົດໝາຍວ່າດ້ວຍການກວດສອບ; ທ່ານກ່າວວ່າ: ຮ່າງກົດໝາຍທັງ 3 ສະບັບນີ້ ຈະເພີ່ມທະວີຄວາມສາມາດຂອງປະເທດໃນການຕິດຕາມ ແລະ ກູ້ຄືນຊັບສິນທີ່ຖືກລັກ, ຂະນະດຽວກັນ ກໍຍົກລະດັບມາດຕະການປ້ອງກັນອາຊະຍາກຳທາງການເງິນ.

ນອກຈາກນັ້ນ, ການສະເໜີປັບປຸງກົດໝາຍວ່າດ້ວຍການກວດສອບ ແນໃສ່ເພີ່ມຄວາມເຊື່ອໝັ້ນຂອງເຈົ້າໜີ້ ແລະ ປົກປ້ອງສິດຂອງລູກໜີ້ໃຫ້ດີຂຶ້ນເຊິ່ງຈະເຮັດໃຫ້ລະບົບການເງິນມີຄວາມຍຸຕິທຳ ແລະ ໂປ່ງໃສຫຼາຍຂຶ້ນ.

ທ່ານລັດຖະມົນຕີ ນານາຢັກກາຣາ ກ່າວວ່າ "ບັນດານິຕິກຳເຫຼົ່ານີ້ ມີຄວາມສຳຄັນຢ່າງຍິ່ງຕໍ່ການເສີມສ້າງຄວາມສົມບູນຂອງລະບົບການເງິນຂອງພວກເຮົາ, ສະໜັບສະໜູນຄວາມໝັ້ນຄົງທາງເສດຖະກິດ, ແລະ ຮັບປະກັນວ່າທັງເຈົ້າໜີ້ ແລະ ລູກໜີ້ ໄດ້ຮັບການປະຕິບັດຢ່າງຍຸຕິທຳ" ທ່ານກ່າວຕື່ມວ່າ, ລັດຖະບານພວມດຳເນີນບັນດາບາດກ້າວທີ່ສຳຄັນ ແນໃສ່ສ້າງຄວາມເຂັ້ມແຂງດ້ານກົດໝາຍ ແລະ ພື້ນຖານເສດຖະກິດຂອງສີລັງກາໃນປີໜ້າ.

# ລັດຖະສະພາເມັກຊິກ ຮັບຮອງກົດໝາຍຫ້າມ "ຢາສູບໄຟຟ້າ"



*ລັດຖະສະພາເມັກຊິກອະນຸມັດການປະຕິຮູບລັດຖະທຳມະນູນ ທີ່ຫ້າມການຜະລິດ, ການຈຳໜ່າຍ ແລະ ການຂາຍຢາສູບໄຟຟ້າ ຖືເປັນການປາບປາມຢ່າງກວ້າງຂວາງຍິ່ງຂຶ້ນຕໍ່ອຸປະກອນທີ່ໄດ້ຮັບການສົ່ງເສີມວ່າເປັນອັນຕະລາຍໜ້ອຍກວ່າການສູບຢາແບບທົ່ວໄປ".*

(AFP) - ເມື່ອວັນທີ 12 ທັນວາຜ່ານມາ, ສະພາສູງຂອງເມັກຊິກ ມີມະຕິສະໜັບສະໜູນຢ່າງລົ້ນເຫຼືອຕໍ່ຮ່າງກົດໝາຍທີ່ລັດຖະບານສະເໜີ ພາຍຫຼັງໄດ້ຮັບການອະນຸມັດຈາກສະພາຜູ້ແທນປະຊາຊົນໜຶ່ງອາທິດກ່ອນໜ້າ, ເຊິ່ງການປະຕິຮູບລັດຖະທຳມະນູນ ຕ້ອງໄດ້ຮັບການອະນຸມັດຈາກລັດຖະສະພາທັງ 32 ລັດຂອງປະເທດ ຈຶ່ງຈະມີຜົນສັກສິດຢ່າງເປັນທາງການ.

ຮ່າງກົດໝາຍດັ່ງກ່າວ ໄດ້ຫ້າມຢາສູບໄຟຟ້າ ລວມທັງຢາສູບໄຟຟ້າແບບໃຊ້ແລ້ວຖິ້ມ ແລະ ຍັງຫ້າມການໃຊ້ຢາເຟັນທານິນ(fentanyl)ຢ່າງຜິດກົດໝາຍ ເຊິ່ງເປັນຢາແກ້ປວດທີ່ມີລິດຮຸນແຮງ; ຢ່າງໃດກໍຕາມ, ບັນດາຜູ້ຂາຍຢາສູບໄຟຟ້າເຕືອນວ່າ ຮ່າງກົດໝາຍສະບັບນີ້ ຈະເຮັດໃຫ້ຕະຫຼາດຢາສູບໄຟຟ້າ ເຂົ້າສູ່ຕະຫຼາດທີ່ຜິດກົດໝາຍ.

"ມີຜູ້ບໍລິໂພກຜະລິດຕະພັນເຫຼົ່ານີ້ເກືອບ 2 ລ້ານຄົນແລະດ້ວຍການຫ້າມການຄ້າຂາຍ... ແມ່ນການມອບຕະຫຼາດນີ້ໃຫ້ຕະຫຼາດມືດ" ທ່ານ ເຄົາເຕມັອກ ຣິເວຣາ (Cuauhtemoc Rivera) ປະທານພັນທະມິດພໍ່ຄ້າຂະໜາດນ້ອຍແຫ່ງຊາດ ກ່າວກັບເຄືອຂ່າຍໂທລະພາບ Milenio.

ເມື່ອປີ 2020, ລັດຖະບານໃນສະໄໝປະທານາທິບໍດີ ອັນເດຣສ ມານູເອວ ໂລເປຊ ໂອບຣາດໍ (Andres Manuel Lopez Obrador) ໄດ້ອອກລັດຖະບັນຍັດຫ້າມການຂາຍຢາສູບໄຟຟ້າໃນປະເທດ, ແຕ່ໃນປີຕໍ່ມາ, ສານສູງສຸດໄດ້ຕັດສິນວ່າ ການຫ້າມດັ່ງກ່າວ "ຂັດຕໍ່ລັດຖະທຳມະນູນ".

ຫຼາຍປະເທດໃນທົ່ວໂລກໄດ້ໃຊ້ມາດຕະການຕ່າງໆເພື່ອຄວບຄຸມຢາສູບໄຟຟ້າ, ໂດຍໃຫ້ເຫດຜົນວ່າ ນິໂກຕິນ ທີ່ຢູ່ໃນຢາສູບໄຟຟ້າ ເສບຕິດໄດ້ຢ່າງງ່າຍດາຍແລະຜົນກະທົບຕໍ່ສຸຂະພາບຂອງປະຊາຊົນໃນໄລຍະຍາວຍັງບໍ່ເປັນທີ່ຮູ້ຈັກຢ່າງຊັດເຈນ.

ອິນເດຍ ແລະ ສິງກະໂປ ໄດ້ສັ່ງຫ້າມຢາສູບໄຟຟ້າ ແລະ ໃນປີນີ້ຮົງກົງກໍໄດ້ປະກາດແຜນການຫ້າມຢາສູບໄຟຟ້າທຸກປະເພດເຊັ່ນກັນ; ຂະນະດຽວກັນ, ອັງກິດ ແລະ ຝຣັ່ງ ໄດ້ວາງມາດຕະການຫ້າມໃຊ້ຢາສູບໄຟຟ້າແບບໃຊ້ແລ້ວຖິ້ມ.

# Queensland ອອກກົດໝາຍ ໃຫ້ເດັກຮັບໂທດຕິດຄຸກເທົ່າຜູ້ໃຫຍ່



*ລັດຄວີນສ໌ແລນ ທີ່ຕັ້ງຢູ່ທາງພາກຕາເວັນອອກສຽງເໜືອຂອງປະເທດອົດສະຕຣາລີ ອອກກົດໝາຍໃຫ້ເດັກທີ່ມີອາຍຸຕັ້ງແຕ່ 10 ປີ ຕ້ອງຮັບໂທດຕິດຄຸກເທົ່າກັບຜູ້ໃຫຍ່, ເຖິງວ່າຈະຈຳກັດຢູ່ໃນກໍລະນີຮ້າຍແຮງກໍຕາມ.*

(AFP) - ກົດໝາຍສະບັບນີ້ ໄດ້ຮັບການອະນຸມັດຈາກສະພາແຫ່ງລັດ ເມື່ອວັນພະຫັດ ທີ 12 ທັນວາຜ່ານມາ, ກຳນົດວ່າ ເດັກທີ່ມີອາຍຸຕັ້ງແຕ່ 10 ປີຂຶ້ນໄປ ຈະປະເຊີນກັບການລົງໂທດຕິດຄຸກເທົ່າກັບຜູ້ໃຫຍ່ຫາກກະທຳຜິດຮ້າຍແຮງ 13 ຄະດີເຊັ່ນ: ການຄາດຕະກຳ, ການຂ້າຄົນຕາຍໂດຍບໍ່ເຈດຕະນາ, ການປະທະກັນທີ່ຜິດກົດໝາຍທີ່ເຮັດໃຫ້ເສຍຊີວິດ, ການທຳຮ້າຍຮ່າງກາຍຈົນໄດ້ຮັບບາດເຈັບສາຫັດ, ການທຳຮ້າຍຮ່າງກາຍທີ່ຮຸນແຮງ, ການເຮັດໃຫ້ບາດເຈັບ, ການງັດເຂົ້າເຮືອນຄົນ ແລະ ທຸລະກິດ ເພື່ອລັກເຄື່ອງຂອງ, ການຂັບຂີ່ຍານພາຫະນະໂດຍປະໝາດ.

ທ່ານ ເດວິດ ຄຣິຊາຟູນລີ (David Crisafulli) ນາຍົກລັດຖະມົນຕີລັດຄວີນສ໌ແລນ ກ່າວວ່າ ກົດໝາຍດັ່ງກ່າວເປັນການຕອບໂຕ້ຕໍ່ວິກິດການອາຊະຍາກຳຂອງໄວໜຸ່ມຢ່າງຈິງຈັງເປັນຄັ້ງທຳອິດເພື່ອຟື້ນຟູຄວາມປອດໄພໃນທ້ອງຖິ່ນ ລວມທັງໃຫ້ຜູ້ກະທຳຜິດຮັບຜິດຂອງການກະທຳຂອງຕົນ ແລະ ໃຫ້ຄວາມສຳຄັນກັບສິດທິຂອງຜູ້ເຄາະຮ້າຍ ຫຼັງຈາກຂໍ້ມູນຫຼ້າສຸດລະບຸວ່າ ຈຳນວນຜູ້ກະທຳຜິດທີ່ເປັນເດັກອາຍຸ 10-17 ປີ ໃນລັດ ເພີ່ມຂຶ້ນ 6% ເມື່ອທຽບເປັນລາຍປີ ຫຼື 10,878 ຄົນ ໃນຮອບ 12 ເດືອນ ຈົນເຖິງວັນທີ 30 ມິຖຸນາປີຜ່ານມາ.

# ປະທານາທິບໍດີໂປໂລຍ ລົງນາມກົດໝາຍ ຫ້າມຂຶ້ນລາຄາໄຟຟ້າຈົນຮອດເດືອນກັນຍາ 2025



(Xinhua) - ວັນອັງຄານ ທີ 10 ທັນວາຜ່ານມາ, ປະທານາທິບໍດີໂປໂລຍ ອັນເດຣຈ ດູດາ (Andrzej Duda) ໄດ້ລົງນາມໃນກົດໝາຍເພື່ອຄຶງລາຄາໄຟຟ້າສຳລັບຄົວເຮືອນໄວ້ທີ່ 500 ຊລໍຕີ (zloty) ໂປແລນ (ປະມານ 123.6 ໂດລາສະຫະລັດ) ຕໍ່ເມກາວັດໂມງ (MWh) ໄປຈົນຮອດທ້າຍເດືອນກັນຍາ 2025, ຕາມຖະແຫຼງການຈາກສຳນັກງານປະທານາທິບໍດີ.

ພາຍໃຕ້ກົດໝາຍໃໝ່, ອົງການປົກຄອງທ້ອງຖິ່ນ ແລະ ໜ່ວຍງານທີ່ລະອຽດອ່ອນບາງແຫ່ງ ຈະໄດ້ຮັບຜົນປະໂຫຍດຈາກລາຄາໄຟຟ້າທີ່ກຳນົດໄວ້ທີ່ 693 ຊລໍຕີ/ເມກາວັດໂມງ ຈົນຮອດທ້າຍເດືອນມີນາ 2025, ມາດຕະການນີ້ຄາດວ່າຈະມີຄ່າໃຊ້ຈ່າຍເພີ່ມຕື່ມ 150 ລ້ານຊລໍຕີ; ກົດໝາຍດັ່ງກ່າວຍັງກຳນົດໃຫ້ຜູ້ຂາຍໄຟຟ້າຕ້ອງຍື່ນຄຳຮ້ອງຂໍປັບອັດຕາຄ່າໄຟຟ້າຕໍ່ປະທານສຳນັກງານຄວບຄຸມພະລັງງານ ພາຍໃນວັນທີ 30 ເມສາ 2025.

ລັດຖະບານຄາດຄະເນວ່າ ມູນຄ່າທັງໝົດໃນການຄຸ້ມຄອງລາຄາໄຟຟ້າໃນຄົວເຮືອນຮອດວັນທີ 30 ກັນຍາ 2025 ຈະມີເຖິງ 3.732 ຕື້ຊລໍຕີ.

(1 ຊລໍຕີ = 0.25 ໂດລາສະຫະລັດ)

# ຍີ່ປຸ່ນປະກາດໃຫ້ການໃຊ້ກັນຊາເປັນສິ່ງຜິດກົດໝາຍ



(Kyodo News) - ຍີ່ປຸ່ນເລີ່ມລົງໂທດທາງອາຍາການນໍາໃຊ້ກັນຊາ ແລະ tetrahydrocannabinol(THC)ສານເຄມີທີ່ເປັນພິດທາງຈິດທີ່ພົບເຫັນຢູ່ໃນພືດ, ເນື່ອງຈາກກົດໝາຍສະບັບປັບປຸງໄດ້ມີຜົນບັງຄັບໃຊ້ໃນວັນພະຫັດທີ 12 ທັນວາຜ່ານມາ, ທ່າມກາງຄວາມກັງວົນທີ່ເພີ່ມຂຶ້ນກ່ຽວກັບການຕິດຢາເສບຕິດຂອງໄວໜຸ່ມ.

ເຖິງແມ່ນວ່າການຄອບຄອງ, ການໂອນ ແລະ ການປູກກັນຊາແລະ THC ໄດ້ຖືກຫ້າມໃນຍີ່ປຸ່ນແລ້ວ; ແຕ່ກົດໝາຍປັບປຸງໃໝ່ຈະຈັດປະເພດກັນຊາແລະ THCເປັນຢາເສບຕິດແລະຫ້າມນໍາໃຊ້ເຊັ່ນດຽວກັນ, ຜູ້ລະເມີດຈະຖືກລົງໂທດຕິດຄຸກສູງສຸດ7ປີ.

ກົດໝາຍສະບັບນີ້ ຍັງເຮັດໃຫ້ຜະລິດຕະພັນທາງການແພດທີ່ໃຊ້ສານສະກັດຈາກກັນຊາ ທີ່ໄດ້ຮັບການພິສູດວ່າມີປະສິດທິພາບ ແລະ ປອດໄພ ຖືກຕ້ອງຕາມກົດໝາຍ.

ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການກ່າວວ່າ: ໃນປີ 2023 ມີຜູ້ຖືກສືບສວນໃນຄະດີອາຍາທີ່ກ່ຽວຂ້ອງກັບກັນຊາເຖິງ6,703ຄົນ ເຊິ່ງເປັນສະຖິຕິສູງສຸດໃນຍີ່ປຸ່ນ, ລື່ນກາຍຈໍານວນຄະດີທີ່ກ່ຽວຂ້ອງກັບຢາບ້າເປັນຄັ້ງທໍາອິດ, ໂດຍ 70% ຂອງຄະດີ ກ່ຽວຂ້ອງກັບຜູ້ທີ່ມີອາຍຸຕໍ່າກວ່າ 30 ປີ; ການສໍາຫຼວດທົ່ວປະເທດໄດ້ດໍາເນີນໃນປີດຽວກັນໂດຍກຸ່ມຄົ້ນຄວ້າຂອງກະຊວງ, ປະເມີນວ່າມີຜູ້ໃຊ້ກັນຊາປະມານ 200,000 ຄົນເມື່ອປີຜ່ານມາ.

# ສະພາແຫ່ງຊາດຕວັກກີ ຜ່ານ ການປະຕິຮູບຄວາມປອດໄພພາຍໃນ




ເມື່ອວັນທີ 21 ພະຈິກຜ່ານມາ, ສະພາແຫ່ງຊາດ ໄດ້ຮັບຮອງເອົາກົດໝາຍສະບັບສົມບູນໂດຍເພີ່ມໂທດສໍາລັບການຄອບຄອງ ແລະ ການຄ້າອາວຸດປືນທີ່ບໍ່ໄດ້ຮັບອະນຸຍາດ.

ໂທດຕິດຄຸກຕໍ່າສຸດສໍາລັບຜູ້ທີ່ພົບເຫັນວ່າຖື, ຊື້ຫຼືຄອບຄອງອາວຸດປືນ ຈະເພີ່ມຂຶ້ນຈາກ 1 ເປັນ 2 ປີ, ໃນຂະນະທີ່ໂທດສູງສຸດຈະເພີ່ມຂຶ້ນຈາກ 3 ເປັນ 4 ປີ; ນອກນີ້, ຍັງໄດ້ວາງມາດຕະການລົງໂທດຢ່າງຮຸນແຮງຕໍ່ຜູ້ທີ່ນໍາເຂົ້າ ຫຼືຄ້າຂາຍອົງປະກອບທີ່ສໍາຄັນຂອງອາວຸດປືນ ເຊັ່ນ: ເລົາປືນ, ສະໄລ້ ຫຼືເຂັມຍິງ ດ້ວຍການລົງໂທດຕິດຄຸກແຕ່5-12ປີ.

ນອກຈາກນັ້ນ, ການປະໝາດຊໍ້າແລ້ວຊໍ້າອີກໃນຮູບແບບການສູນເສຍ ຫຼື ຖືກລັກອາວຸດປືນ 3 ຄັ້ງ ຈະເຮັດໃຫ້ຜູ້ກ່ຽວຖືກຖອນໃບອະນຸຍາດ; ບຸກຄົນເຫຼົ່ານີ້ຈະຖືກຫ້າມບໍ່ໃຫ້ຍື່ນຄໍາຮ້ອງຂໍໃບອະນຸຍາດໃໝ່ເພື່ອເປັນເຈົ້າຂອງ ຫຼື ຖືອາວຸດປືນ ເປັນເວລາ 5 ປີ.

ເຫດການທີ່ກ່ຽວຂ້ອງກັບປືນຂອງບຸກຄົນ, ສ່ວນໃຫຍ່ແມ່ນບໍ່ມີໃບອະນຸຍາດ, ເຮັດໃຫ້ມີຜູ້ເສຍຊີວິດທັງໝົດ 2,500 ຄົນໃນຕວັກກີເມື່ອປີຜ່ານມາ, ອີງຕາມການລາຍງານທີ່ຈັດທໍາໂດຍ NGO.

ລາຍງານໄດ້ຍົກໃຫ້ເຫັນວ່າໃນຈໍານວນປືນຫຼາຍກວ່າ40 ລ້ານກະບອກໃນຕວັກກີ, ມີພຽງແຕ່ 4 ລ້ານກະບອກເທົ່ານັ້ນທີ່ໄດ້ຮັບອະນຸຍາດ, ໂດຍທຸກໆ 2 ຄົນ ມີປືນຢູ່ໃນຄອບຄອງ; ໃນຈໍານວນປືນທີ່ບໍ່ໄດ້ຮັບອະນຸຍາດປະມານ36ລ້ານກະບອກ, ເຫດການຄວາມຮຸນແຮງດ້ວຍອາວຸດປືນເພີ່ມຂຶ້ນ 5% ທຸກໆປີ.

ບົດລາຍງານເນັ້ນໜັກວ່າ ເຈົ້າຂອງປືນສ່ວນໃຫຍ່ແມ່ນກຸ່ມໄວໜຸ່ມ, ໂດຍ 70% ຂອງເຈົ້າຂອງປືນ ມີອາຍຸຕໍ່າກວ່າ40 ປີ; ຜູ້ໃຫຍ່ໃນໄວອາຍຸປະມານ 25ປີແມ່ນຜູ້ໃຊ້ຕົ້ນຕໍ, ການຂ້າຕົວຕາຍທີ່ກ່ຽວຂ້ອງກັບປືນແມ່ນເພີ່ມຂຶ້ນ, ເປັນສາເຫດອັນດັບສອງຂອງການຂ້າຕົວຕາຍໃນກຸ່ມໄວຮຸ່ນ.

# ປະທານລັດຖະສະພາສີລັງກາລາອອກ ທ່າມກາງການໂຕ້ຖຽງເລື່ອງວຸດທິການສຶກສາ

(Xinhua) - ທ່ານ ອະໂສກາ ຊາປຸມານ ຣັນວາລາ (AsokaSapumalRanwala) ປະທານລັດຖະສະພາສີລັງກາລາອອກຈາກຕໍາແໜ່ງເມື່ອວັນສຸກທີ 13 ທັນວາຜ່ານມາ, ໃນຂະນະທີ່ມີການໂຕ້ຖຽງກ່ຽວກັບວຸດທິການສຶກສາ.


ທ່ານ ອະໂສກາ ຊາປຸມານ ຣັນວາລາ

ກ່ອນໜ້ານີ້, ພັກຝ່າຍຄ້ານໄດ້ກ່າວຫາປະທານລັດຖະສະພາວ່າ ເວົ້າຕົວະກ່ຽວກັບການສໍາເລັດການສຶກສາລະດັບປະລິນຍາເອກຈາກມະຫາວິທະຍາໄລຍີ່ປຸ່ນ.

ໃນຖະແຫຼງການ, ທ່ານ ຣັນວາລາ ໄດ້ຊີ້ແຈງວ່າບໍ່ເຄີຍຕົວະກ່ຽວກັບພື້ນຖານການສຶກສາຂອງຕົນ, ແຕ່ຍອມຮັບວ່າປັດຈຸບັນນີ້ຍັງບໍ່ມີຫຼັກຖານທາງເອກະສານເພື່ອຢັ້ງຢືນຜົນການຮຽນ; ທ່ານກ່າວວ່າ ຕົນໄດ້ຮັບປະລິນຍາເອກຈາກສະຖາບັນຄົ້ນຄວ້າທີ່ຂຶ້ນກັບມະຫາວິທະຍາໄລວາເຊດະ (Waseda) ໃນປະເທດຍີ່ປຸ່ນ ແລະ ຫວັງວ່າ ຈະໄດ້ຮັບໃບປະກາດປະລິນຍາໃນອະນາຄົດ."ຢ່າງໃດກໍຕາມເນື່ອງຈາກຄວາມສັບສົນທີ່ເກີດຂຶ້ນກ່ຽວກັບບັນຫານີ້ ແລະ ເພື່ອບໍ່ໃຫ້ຜູ້ທີ່ໄວ້ວາງໃຈ ແລະ ລົງຄະແນນສຽງໃຫ້ລັດຖະບານນີ້ອັບອາຍ, ຂ້າພະເຈົ້າຈຶ່ງໄດ້ຕັດສິນໃຈລາອອກຈາກຕໍາແໜ່ງປະທານລັດຖະສະພາເປັນການຊົ່ວຄາວ" ທ່ານກ່າວ.

ການລາອອກດັ່ງກ່າວເກີດຂຶ້ນໃນຂະນະທີ່ຝ່າຍຄ້ານພະຍາຍາມຍື່ນຍັດຕິບໍ່ໄວ້ວາງໃຈຕໍ່ປະທານລັດຖະສະພາ ເນື່ອງຈາກການໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງແກ່ສາທາລະນະຊົນກ່ຽວກັບວຸດທິການສຶກສາຂອງເຂົາ.

ເມື່ອວັນອັງຄານທີ 17 ທັນວາ, ລັດຖະສະພາ ໄດ້ລົງຄະແນນສຽງເປັນເອກະສັນແຕ່ງຕັ້ງທ່ານ ຈາກາດ ວິກຣົມລັດຕະເນ (Jagath Wickramaratne) ສະມາຊິກລັດຖະສະພາຈາກພັກພະລັງປະຊາຊົນແຫ່ງຊາດ(National People's Power - NPP) ພັກລັດຖະບານຊຸດປັດຈຸບັນ ໃຫ້ດໍາລົງຕໍາແໜ່ງເປັນປະທານຜູ້ໃໝ່.

ທ່ານ ນາງ ຮາຣິນີ ອະມາຣາສຸລິຍາ(HariniAmarasuriya) ນາຍົກລັດຖະມົນຕີ ເປັນຜູ້ສະເໜີຊື່ທ່ານ ວິກຣົມລັດຕະເນ ແລະ ທ່ານ ພິມານ ລັດຕະນະຍາເກ(BimalRatnayake) ຫົວໜ້າລັດຖະສະພາ ກໍສະໜັບສະໜູນການສະເໜີຂອງນາງ; ບໍ່ມີການສະເໜີຊື່ອື່ນ ແລະ ທ່ານ ຮອງປະທານລັດຖະສະພາຣິຊວີ ຊາລີ (Rizvie Salih) ໄດ້ປະກາດຕໍ່ລັດຖະສະພາວ່າ ທ່ານ ວິກຣົມລັດຕະເນ ໄດ້ຮັບການແຕ່ງຕັ້ງເປັນປະທານຜູ້ໃໝ່ຢ່າງເອກະສັນ.


ທ່ານ ຈາກາດ ວິກຣົມລັດຕະເນ

## ມອບ-ຮັບ...

(ຕໍ່ຈາກໜ້າ 1)

ນອນ 18 ແກັດ (144 ເຄື່ອງ) ລວມມູນຄ່າ 7,200 ໂດລາສະຫະລັດ ຈາກມູນນິທິພັດທະນາລ້ານຊ້າງ-ແມ່ຂອງ, ຕາງໜ້າກ່າວມອບໂດຍທ່ານ ນາງ ພູຄໍາ ວົງວິຈິດແລະຕາງໜ້າກ່າວຮັບໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ທ່ານປອ. ນາງສູນທອນ ໄຊຍະຈັກໄດ້ສະແດງຄວາມຂອບໃຈ ແລະ ມອບໃບຍ້ອງຍໍຂອງຄະນະປະຈໍາສະພາແຫ່ງຊາດ ເພື່ອເປັນການຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ແລະອຸປະຖໍາໃນຄັ້ງນີ້.

**(ນາງ ກຸກກິກ ບຸດດາໄຊ)**

ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ປັນຍາປະດິດ ເພື່ອພິຊິດ ຜົນສໍາເລັດລວມສໍາລັບມວນມະນຸດ

ໃນປັດຈຸບັນ, ປັນຍາປະດິດ ເຊິ່ງເປັນນະວັດຕະກໍາຕໍ່ຍອດເຕັກໂນໂລຊີຂໍ້ມູນຂ່າວສານລໍ້າຍຸກ ໄດ້ກາຍເປັນຄໍາສັບຕິດສົບຕິດປາກຂອງຄົນໃນທຸກໆສັງຄົມໃນທຸກໆປະເທດ ຈົນບໍ່ຈໍາເປັນຕ້ອງອະທິບາຍໃຫ້ຍາວຍືດເສຍເວລາຕື່ມ; ດັ່ງນັ້ນ, ໃນບົດຄວາມບົດນີ້ ຈຶ່ງຂໍສະເໜີຂ່າວສໍາຄັນຈໍານວນໜຶ່ງກ່ຽວກັບການນໍາໃຊ້ ແລະ ພັດທະນາປັນຍາປະດິດຢູ່ໃນບາງປະເທດ. ຂໍເລີ່ມຈາກ**ປະເທດເຢຍລະມັນ**ກ່ອນ ບ່ອນທີ່ນະວັດຕະກໍາປັນຍາປະດິດໄດ້ຖືກຫັນເຂົ້າໃນວຽກງານຕົວຈິງ. ຂ່າວຕ່າງປະເທດໃນທ້າຍເດືອນພະຈິກປີນີ້ໃຫ້ຮູ້ວ່າ ໃນປັດຈຸບັນ, ປະມານເຄິ່ງໜຶ່ງຂອງຈໍານວນບໍລິສັດໃນເຢຍລະມັນ ທີ່ມີພະນັກງານແຕ່ 250 ຄົນຂຶ້ນໄປ ເຊິ່ງຖືວ່າມີຂະໜາດໃຫຍ່ ໄດ້ນໍາໃຊ້ປັນຍາປະດິດເຂົ້າໃນການເຮັດວຽກ, ສ່ວນບໍລິສັດຂະໜາດກາງທີ່ມີພະນັກງານລະຫວ່າງ 50-249 ຄົນ ທີ່ນໍາໃຊ້ປັນຍາປະດິດນັ້ນ ມີໜ້ອຍ 28% ຂອງຈໍານວນທັງໝົດ, ບໍລິສັດທີ່ມີພະນັກງານ 10-49 ຄົນ ເຊິ່ງຖືວ່າເປັນລະດັບນ້ອຍນັ້ນ ມີພຽງ 17% ທີ່ນໍາໃຊ້ປັນຍາປະດິດ. ການນໍາໃຊ້ປັນຍາປະດິດຢູ່ຕາມບໍລິສັດນັ້ນ ສ່ວນຫຼາຍແມ່ນໃຊ້ເພື່ອວິເຄາະພາສາຂຽນ ແລະ ການຈົດຈໍາສໍານຽງສຽງເວົ້າ ທັງສອງຮູບແບບການນໍາໃຊ້ນີ້ສໍາຄັນ ແລະ ມີຄວາມຈໍາເປັນຫຼາຍສໍາລັບການຕະຫຼາດ ແລະ ການຂາຍ; ສ່ວນອີກດ້ານໜຶ່ງ ຂ່າວໄດ້ບອກວ່າ ຫຼາຍໆຫົວໜ່ວຍທຸລະກິດຍັງລັງເລເທື່ອທີ່ຈະນໍາໃຊ້ປັນຍາປະດິດຢ່າງເຕັມພິກັດດ້ວຍເຫດຜົນບາງຢ່າງເຊັ່ນຍັງຂາດຄວາມຮູ້ຄວາມເຂົ້າໃຈຢ່າງລະອຽດຖີ່ຖ້ວນກ່ຽວກັບເຕັກໂນໂລຊີລໍ້າຍຸກນີ້ ເຊິ່ງລວມມີສູງເຖິງ 71%; ສ່ວນຈໍາພວກທີ່ຍັງບໍ່ແນ່ນອນໃຈໃນການນໍາໃຊ້ປັນຍາປະດິດ ຍ້ອນຢ້ານມີຜົນກະທົບທາງກົດໝາຍນັ້ນ ກວມເອົາ 58% ແລະ ຍ້ອນເປັນຫວ່ງກ່ຽວກັບການຄຸ້ມຄອງຂໍ້ມູນ ມີ 53%. ອ່ານຂ່າວນີ້ແລ້ວ ໃຫ້ຄວາມຮູ້ຫຼາຍຢ່າງ ໂດຍສະເພາະແມ່ນກັບບັນຫາຄວາມລະອຽດຖີ່ຖ້ວນທາງດ້ານກົດໝາຍ, ດ້ານຈັນຍາບັນ ກໍຄືມາດຕະການປົກປ້ອງຂໍ້ມູນ ເພາະຖ້າໃຊ້ບໍ່ເປັນ ກໍຈະບໍ່ເຫັນຄຸນຄ່າເຕັມສ່ວນ ດີບໍ່ດີອາດໄດ້ຮັບຜົນກະທົບທາງລົບຊໍ້າ.

ຢູ່**ປະເທດຍີ່ປຸ່ນ** ກໍມີຂ່າວອອກມາໃນເດືອນພະຈິກປີນີ້ວ່າ ທາງການຂອງປະເທດນີ້ ໄດ້ຂຶ້ນແຜນຈັດສັນຫຼາຍກວ່າ 10 ພັນຕື້ເຢັນ ເພື່ອສົ່ງເສີມອຸດສາຫະກໍາ ປັນຍາປະດິດ ຫຼື AI ແລະ ເຊມິຄອນດັກເຕີ ທີ່ເອີ້ນກັນສັ້ນໆວ່າ ຊິບ (Chip), ຈໍານວນເງິນຫຼາຍກວ່າ 10 ພັນຕື້ເຢັນນີ້ ຈະນໍາໃຊ້ສະໜັບສະໜູນກະຕຸກຊຸກຍູ້ການລົງທຶນຂອງທາງພາກລັດແລະພາກເອກະຊົນ ໃຫ້ໄດ້ໃນວົງທຶນທັງໝົດ 50 ພັນຕື້ເຢັນ ໃນທົດສະວັດຕໍ່ໄປ; ລັດຖະບານຍີ່ປຸ່ນພວມຢູ່ໃນການອອກພັນທະບັດທີ່ຄໍ້າປະກັນດ້ວຍຮຸ້ນ NTT ແລະ ຊັບສິນອື່ນໆຂອງລັດຖະບານ ເພື່ອສະໜັບສະໜູນແຜນການນີ້. ໃນໄລຍະຜ່ານມາ, ອຸດສາຫະກໍາເຊມິຄອນດັກເຕີຂອງຍີ່ປຸ່ນ ເຄີຍໄດ້ຮັບທຶນສະໜັບສະໜູນຈາກພາກລັດມາແລ້ວເກືອບ 4 ພັນຕື້ເຢັນ ແຕ່ກໍຍັງຕ້ອງການທຶນຕື່ມອີກເທົ່າຕົວ ຈຶ່ງຈະສາມາດມີຜະລິດຕະພັນທີ່ມີຄຸນນະພາບສູງໄດ້. ໂລກເຮົາໃນປັດຈຸບັນ ພວມຢູ່ໃນໄລຍະອຸດສາຫະກໍາ 4.0 ເຊິ່ງມີເຕັກໂນໂລຊີເປັນແມ່ແຮງຂັບເຄື່ອນ, ຈໍານວນຜູ້ທີ່ໃຊ້ອິນເຕີເນັດໃນທົ່ວໂລກບັນລຸ 5.5 ຕື້ຄົນແລ້ວ ນີ້ລະຄືກໍາລັງແຮງພື້ນຖານຂອງອຸດສາຫະກໍາປັນຍາປະດິດ.



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ນະສະມາຊິກສະພາແຫ່ງຊາດເພດຍິງ, ມີ ສສຊ ເພດຍິງ ໃນຂອບເຂດທົ່ວປະເທດແລະແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄັ້ງນີ້ ໄດ້ຮັບຟັງການເຜີຍແຜ່ແນວທາງນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ ແລະ ສົນທິສັນຍາສາກົນກ່ຽວກັບການສົ່ງເສີມຄວາມສະເໝີພາບຍິງ-ຊາຍ; ຜົນການວິເຄາະດ້ານບົດບາດຍິງ-ຊາຍໃນສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ(ສພຂ) ຈາກຊ່ຽວຊານໂຄງການສະເຕັບສ໌ (STEPS); ປຶກສາຫາລື ແລະ ປະກອບຄໍາເຫັນຕໍ່ບົດສະຫຼຸບການເຄື່ອນໄຫວປະຈໍາປີ2024ແລະແຜນການວຽກງານຈຸດສຸມປະຈໍາປີ 2025 ຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ;ເຜີຍແຜ່ຜົນສໍາເລັດການຈັດກອງປະຊຸມສະມາຊິກລັດຖະສະພາເພດຍິງໄອປາ ຫຼື ໄວປາ (WAIPA) ຄັ້ງທີ 45.

ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຈາກທ່ານປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສໍາເລັດທີ່ພົ້ນເດັ່ນຂອງຄະນະ ສສຊ ເພດຍິງ ຍາດມາໄດ້ໃນໜຶ່ງປີຜ່ານມາເປັນຕົ້ນແມ່ນການເປັນເຈົ້າພາບຈັດກອງປະຊຸມເວທີຜູ້ນໍາທາງການເມືອງຂອງເພດຍິງ,ກອງປະຊຸມໄວປາຄັ້ງທີ45, ການຈັດຕັ້ງປະຕິບັດວຽກງານຈຸດສຸມປະຈໍາປີ2024 ຈໍານວນ13 ວຽກຈຸດສຸມ, ສາມາດເຮັດສໍາເລັດ 11 ວຽກຢ່າງຈົບງາມ ອັນເປັນການປະກອບສ່ວນສໍາຄັນເຂົ້າໃນຜົນງານລວມຂອງ ສພຊ, ເຮັດໃຫ້ບົດບາດຂອງສະພາແຫ່ງຊາດ ກໍຄື ສສຊ ເພດຍິງ ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ. ພ້ອມນັ້ນ, ທ່ານຍັງໄດ້ໃຫ້ທິດຊີ້ນໍາແກ່ຄະນະ ສສຊ ເພດຍິງ ສືບຕໍ່ຄົ້ນຄວ້າ, ປັບປຸງ ມະຕິວ່າດ້ວຍການຈັດຕັ້ງແລະເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງຊຸດທີIXແລະການປັບປຸງກອງເລຂາຊ່ວຍວຽກໃນທ້າຍສະໄໝ ໃຫ້ມີຄວາມສອດຄ່ອງກັບເງື່ອນໄຂຕົວຈິງໃນປັດຈຸບັນ; ຄົ້ນຄວ້າແລະຊຸກຍູ້ສົ່ງເສີມເພດຍິງທີ່ມີມາດຕະຖານເງື່ອນໄຂ ເພື່ອລົງສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ໃຫ້ມີຈໍານວນເພີ່ມຂຶ້ນ ທັງຮັບປະກັນຄຸນນະພາບດ້ວຍວິທີການຕ່າງໆ, ລວມທັງການສ້າງຄວາມເຂັ້ມແຂງໃຫ້ສສຊເພດຍິງແລະເປົ້າໝາຍໃໝ່ ເພື່ອເຮັດໃຫ້ເຂົາເຈົ້າລົງສະໝັກຮັບເລືອກຕັ້ງເຂົ້າເປັນພະນັກງານນໍາພາຄຸ້ມຄອງແຕ່ລະຂັ້ນ ໂດຍສົມທົບກັບຄະນະພັກ, ອົງການປົກຄອງ ແລະ ສພຂກໍຄືພາກສ່ວນທີ່ກ່ຽວຂ້ອງຕ່າງໆ; ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍທິດທາງແຜນການປີ2025 ຂອງຄະນະ ສສຊ ເພດຍິງ ໃຫ້ເປັນແຜນວຽກລະອຽດຂອງຄະນະ ສສຊ ເພດຍິງປະຈໍາແຕ່ລະເຂດເລືອກຕັ້ງ ພ້ອມທັງຊອກວິທີການ, ມາດຕະການຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ;ເພີ່ມທະວີການຂໍທິດຊີ້ນໍາຈາກຄະນະປະຈໍາສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ຄະນະພັກອົງການປົກຄອງແຂວງ,ຄະນະສສຊ ເພດຍິງ ໃຫ້ເປັນປົກກະຕິ ເພື່ອເຮັດໃຫ້ການປະຕິບັດແຜນວຽກຂອງ ສສຊ ເພດຍິງ ສາມາດບັນລຸຕາມແຜນທີ່ວາງໄວ້. ນອກນັ້ນ, ທ່ານຍັງໄດ້ເຂົ້າຮ່ວມ ແລະ ມີຄໍາເຫັນແລກປ່ຽນບົດຮຽນຂອງສາກົນໃນການສົ່ງເສີມບົດບາດເພດຍິງໃນເວທີການເມືອງ ຈາກທ່ານນາງ ມາຕິນ ແທເຣີ ຜູ້ຕາງໜ້າອົງການສະຫະປະຊາຊາດເພື່ອການພັດທະນາປະຈໍາສປປລາວ ແລະທີມງານໂຄງການSTEPS ທີ່ໄດ້ນໍາສະເໜີຜົນການວິເຄາະບົດບາດຍິງ-ຊາຍໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ຜ່ານການດໍາເນີນກອງປະຊຸມເຫັນວ່າ ບັນດາທ່ານສະມາຊິກສະພາແຫ່ງຊາດເພດຍິງ ສາມາດຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງຕື່ມອີກກ່ຽວກັບການສົ່ງເສີມບົດບາດຂອງແມ່ຍິງໃນເວທີການເມືອງ; ຄະນະ ສສຊ ເພດຍິງ ຍາມໃດກໍຖືສໍາຄັນໃນການປະສານງານແລະເຮັດວຽກຮ່ວມກັບບັນດາຂະແໜງການທີ່ກ່ຽວຂ້ອງ ແນໃສ່ປະຕິບັດພາລະບົດບາດໃນການເຄື່ອນໄຫວວຽກງານຂອງ ສສຊ ເພດຍິງ ເພື່ອສາມາດເປັນເສນາທິການໃຫ້ແກ່ຄະນະປະຈໍາສະພາແຫ່ງຊາດໃນການປະຕິບັດ 3 ພາລະບົດບາດຂອງ ສພຊ ໃນຂົງເຂດວຽກງານຂອງລັດຖະສະພາເພດຍິງ.

ຕາມພາສາ ກາຕູນ




● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນໍາ
ທ່ານ ສົງຄໍາ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄໍາຫວັນ ດາລາວົງ

ຄະນະບັນນາທິການ
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຽງຄູນ
ທ່ານ ນາງ ອາລິນ ສຸພົມມະປະດິດ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກກິກ ບຸດດາໄຊ